ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 046 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 20 APR 2022

ຮຽນ : ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 23/3/2022.
- ອີງຕາມບັນຊີທະບຽນຜູ້ຖືຮຸ້ນຈາກສຳນັກງານຕະຫຼາດຫຼັກຊັບລາວ.

ບໍລິສັດ ຊີມັງລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ບຊລ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໃນວັນທີ 29/4/2022 ເວລາ 09:00 ໂມງ,ເລີ່ມລົງທະບຽນເວລາ 8:30 - 09:00 ໂມງ, ທີ່ຫ້ອງປະຊຸມໃຫ່ຍຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ສປປລາວ ເພື່ອພິຈາລະນາ ແລະຮັບຮອງເອົາມະຕິຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ບໍລິສັດ ບຊລ ໄດ້ແຈ້ງໃຫ້ຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 1/4/2022 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ສະນັ້ນ, ບໍລິສັດ ບຊລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນ ຈາກບໍລິສັດ ຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ ຈະຕ້ອງໄດ້ເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານ ເຂົ້າໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານ ບໍລິສັດ

ຢາງຊຸນຢິ

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021

ຂອງ ບໍລິສັດ ຊີມັງລາວ ມະຫາຊົນ

ເອກະສານຄັດຕິດ :

1. ວາລະກອງປະຊຸມຜູ້ຖືຮຸ້ນ ບຊລ ປີ 2021.
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020
3. ບົດລາຍງານຜົນການດຳເນີນທຸລະກິດປີ 2021.
4. ບົດລາຍງານການເງິນປະຈຳປີ 2021 ແລະບໍ່ຈ່າຍເງິນປັນຜົນ
5. ແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ
6. ແບບຟອມໃບມອບສິດ.
7. ແຜນທີ່ຕັ້ງຂອງກອງປະຊຸມສາມັນຜູ້ຖືຮຸ້ນປີ 2021

ໝາຍເຫດ :

1. ຜູ້ຖືຮຸ້ນທຸກໆທ່ານຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆເລີ່ມແຕ່ວັນທີ 20/4/2022 ຢູ່ຕະຫຼາດຫຼັກຊັບ ຊັ້ນ 4, ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ ບ້ານໂພນທັນ ເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ໂທລະສັບ (856-21) 454361, ແຟັກ (856-21) 454361-4.
2. ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດວ້ຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະຕາມ <u>ເອກະສານຄັດຕິດ 6</u> ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ.
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມກອງປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນນີ້ ແລະສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້,
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ຜູ້ອຳນວຍການ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະລົງລາຍເຊັນໃນໃບມອບສັນທະ ແລະໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການ ຂອງບໍລິສັດທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບສົ່ງເຖິງ ບໍລິສັດ ຊີມັງລາວ ມະຫາຊົນ ຊັ້ນ 1, ພະແນກເລຂານຸການ ບໍລິສັດ, ບ້ານ ໂພນພະເນົາ, ຮ່ອມ 3 ເມືອງໄຊເສດຖາ ນະຄອນຫລວງວຽງຈັນ ສປປລາວ, ຕູ້ ປ.ນ 6821 ແລະກະລຸນາສົ່ງເຖິງບໍລິສັດ ກ່ອນວັນທີ 29/04/2022.
6. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ກະລຸນາສອບຖາມ ທ່ານ ນາງ ຄຳມີ (856-20) 55966610 ແລະ ທ່ານ ຈ້າວ ປິ່ງປົ່ນ (856-20) 56011786 ໃນໂມງລັດຖະການ.

ຄຳແນະນຳກ່ຽວກັບການລົງຄະແນນສຽງ

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນເປັນຜູ້ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ບໍລິສັດ ຊີມັງລາວ ມະຫາຊົນຈະບັນທຶກການລົງຄະແນນສຽງໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍ່ບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
3. ໃນການລົງຄະແນນສຽງຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້, ໃນນັ້ນ ຕ້ອງລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
4. ຫຼັງຈາກປະກອບຂໍ້ມູນຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະຮວບລວມຄະແນນສຽງ.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍໂດຍການນັບຄະແນນສຽງຈະຖືເອົາ ໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທັງໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 143 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ເອກະສານຄັດຕິດ: 01

<u>ວາລະຂອງກອງປະຊຸມ</u>
<u>ສາມັນຜູ້ຖືຮຸ້ນ ບຊລ ປະຈຳປີ 2021</u>

- **ວາລະທີ 01:** ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

I. ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020

ກ່ຽວກັບວາລະທີ 1,2,3,4,5,6,7 ແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນການເຫັນດີ ຂອງກອງປະຊຸມສາມັນຜູ້ຖືຮຸ້ນແລ້ວ.

ຄຳເຫັນຂອງສະພາບໍລິຫານ :

ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປີຜ່ານມາແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

- **ວາລະທີ 02** : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020

ລາຍລະອຽດ :

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ໄດ້ຈັດຂຶ້ນໃນວັນທີ 30 ເມສາ 2021, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 02 ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ :

ບົດບັນທຶກກອງປະຊຸມມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020, ວັນທີ 30 ເມສາ 2021.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- **ວາລະທີ 03:** ພິຈາລະນາ ແລະຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2021.

ລາຍລະອຽດ :

ລາຍງານຜົນການດຳເນີນທຸລະກິດປະຈຳປີ 2021 ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 23/3/2022 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 03.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ຜົນການດຳເນີນທຸລະກິດປະຈຳປີ 2021.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- **ວາລະທີ 04 :** ພິຈາລະນາ ແລະຮັບຮອງບົດລາຍງານການເງິນປະຈຳປີ 2021 ແລະບໍ່ຈ່າຍເງິນປັນຜົນ

ລາຍລະອຽດ :

ບົດລາຍງານການເງິນປະຈຳປີ 2021 ແມ່ນໄດ້ຜ່ານການກວດສອບຢ່າງຖືກຕ້ອງຈາກ ບໍລິສັດ ກວດສອບພາຍນອກ EY ມີເອກະສານຄັດຕິດ 04 ,ເຊິ່ງໄດ້ມີການລາຍງານຕໍ່ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 23/3/2022 ແລະ ມີການເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບລາວ.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານການເງິນປະຈຳປີ 2021 ແລະ ບໍ່ໄດ້ຈ່າຍເງິນປັນຜົນ ປະຈຳປີ 2021.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

- **ວາລະທີ 05 :** ພິຈາລະນາ ແລະຮັບຮອງແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ.

ລາຍລະອຽດ :

ລາຍງານແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ ທີ່ໄດ້ລາຍງານໃນກອງປະຊຸມສະພາບໍລິຫານ ໃນວັນທີ 23/3/2022 ເຊິ່ງມີເນື້ອໃນລາຍລະອຽດໃນເອກະສານຄັດຕິດ 05.

ຄຳເຫັນຂອງສະພາບໍລິຫານ :

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວຈຶ່ງເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງເອົາ ແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ.

ຄະແນນສຽງທີ່ຕ້ອງໃຊ້ :

ອີງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ວ່າວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງນຶ່ງຂອງຄະແນນສຽງທີ່ເຂົ້າຮ່ວມກອງປະຊຸມ.

ເອກະສານຄັດຕິດ :02

ບົດບັນທຶກກອງ

ປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ 037/ບຊລ

ນະຄອນຫລວງວຽງຈັນ, ວັນທີ 04 APR 2021

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ)

ປະຊຸມເມື່ອວັນທີ 30/04/2021 ເວລາ 09:00 ໂມງ ທີ່ຫ້ອງປະຊຸມຊັ້ນ 08 ອາຄານຕະຫຼາດຫຼັກຊັບ ລາວບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ, ເປັນປະທານກອງປະຊຸມໂດຍທ່ານ ຈ່າງລີ ຜູ້ອຳນວຍການ ບຊລ ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 20 ທ່ານ, ໃນນີ້ມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 08 ທ່ານ ແລະມອບສັນທະ 12 ທ່ານ, ມີຮຸ້ນລວມກັນທັງໝົດ 35,591,000 ຮຸ້ນ ເທົ່າກັບ 89 ສ່ວນຮ້ອຍຂອງ ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະກົດລະບຽບຂອງບໍລິສັດ.

I. ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະແນະນຳຜູ່ທີ່ເຂົ້າຮ່ວມປະຊຸມ ດັ່ງນີ້ :

- <u>ຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຢູ່ເມືອງຄຸນມິງ ສປຈີນ (ແບບອອນລາຍ):</u>

1. ທ່ານ ຢາງຊຸນຢິງ ຕຳແໜ່ງ : ປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ, ຜູ້ອຳນວຍການ ໃຫ່ຍຂອງບໍລິສັດການຮ່ວມມືເຕັກນິກເສດຖະກິດສາກົນ ຢຸນນານ ສປຈີນ ຈຳກັດ (CYC)
2. ທ່ານ ອູຢາງຈີຢິງ ຕຳແໜ່ງ : ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ, ຮອງ ຜູ້ອຳນວຍການໃຫ່ຍຂອງບໍລິສັດການຮ່ວມມືເຕັກນິກເສດຖະກິດສາກົນ ຢຸນນານ ສປຈີນ ຈຳກັດ (CYC)
3. ທ່ານ ສຽວເຈ ຕຳແໜ່ງ : ກຳມະການສະພາບໍລິຫານ ອິດສະຫຼະຂອງບໍລິສັດ ຊີມັງລາວ ມະຫາຊົນ
4. ທ່ານ ຫຼີ ຊຸນໂປ ຕຳແໜ່ງ : ກຳມະການສະພາບໍລິຫານ ອິດສະຫຼະຂອງບໍລິສັດ ຊີມັງລາວ ມະຫາຊົນ

- <u>ຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຢູ່ນະຄອນຫຼວງວຽງຈັນ ປະກອບມີ :</u>

1. ທ່ານ ວັນທອງ ສິດທິກຸນ ຕຳແໜ່ງ : ຮອງປະທານສະພາບໍລິຫານຂອງ ບໍລິສັດ LCC, ຜູ້ອຳນວຍການ ໃຫ່ຍ ລັດວິສາຫະກິດ ພກອ (DAI).
2. ທ່ານ ຄຳບົນ ໄຊເລົ່າວົງ ຕຳແໜ່ງ : ກຳມະການສະພາບໍລິຫານຂອງ ບໍລິສັດ LCC, ຮອງຜູ້ອຳນວຍການ ໃຫ່ຍ ລັດວິສາຫະກິດ ພກອ (DAI).
3. ທ່ານ ຈ່າງລີ : ກຳມະການສະພາບໍລິຫານ, ຜູ້ອຳນວຍການ ບໍລິສັດ LCC.
4. ທ່ານ ວິຈິດ ສຸວັນນະລາດ : ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການ ບໍລິສັດ LCC.
5. ທ່ານ ເຈ້ຍ ຢ້າວຊີ ຕຳແໜ່ງ : ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການ ບໍລິສັດ LCC.
6. ທ່ານ ວິງວິຈິດ ແກ້ວວິງກິດ ຕຳແໜ່ງ : ກຳມະການສະພາບໍລິຫານ ອິດສະຫຼະ ຂອງບໍລິສັດ LCC

7. ທ່ານ ລີລິນ ຜູ້ອຳນວຍການບໍລິສັດຫຼັກຊັບລາວຈີນ ຈຳກັດ
8. ທ່ານ ທອງປົນ ກິ່ງຄຳເພັດ ຮອງຜູ້ອຳນວຍການໃຫ່ຍ ລັດວິສາຫະກິດ ພກອ (DAI).
9. ທ່ານ ນ ວັນນະພອນ ສຸນັນທາ ຕຳແໜ່ງ : ວິຊາການພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ ສຄຄຊ ເປັນຫົວໜ້າຄະນະ
10. ທ່ານ ນ ອານຸວັນ ທຳມະວົງ ຕຳແໜ່ງ : ວິຊາການພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ ສຄຄຊ ເປັນຄະນະ
11. ທ່ານ ເອກະໄຊ ມະນີວົງ ຕຳແໜ່ງ : ຫົວໜ້າຂະແໜງ, ພະແນກຈົດທະບຽນ ແລະເປີດເປີດຂໍ້ມູນ ຕລຫຊ ເປັນຄະນະ
12. ທ່ານ ສິນທະນູ ສົມພອງບຸດຕະຂັນ ຕຳແໜ່ງ : ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ

II. ສະເໜີກ່ຽວກັບລະບຽບ, ວິທີການລົງຄະແນນສຽງ ໃຫ້ທີ່ປະຊຸມຊາບ ຊຶ່ງມີ ລະອຽດດັ່ງລຸ່ມນີ້ :

1. ການລົງຄະແນນສຽງ :

1) ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
2) ໃນການລົງຄະແນນສຽງ,ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້,ໃນນັ້ນ ຕ້ອງ ລະບຸຢ່າງຈະແຈ້ງກ່ຽວກັບ ຊື່ ແລະ ນາມສະກຸນຂອງທ່ານ,ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
3) ກໍລະນີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ກາເຄື່ອງໝາຍໃສ່ຊ່ອງບໍ່ເຫັນດີໃນບັດລົງຄະແນນ ແລ້ວຍົກບັດນັ້ນຂຶ້ນ ເພື່ອໃຫ້ພະນັກງານນຳໄປກວດນັບຄະແນນສຽງໃນອາລະນັ້ນໆ ແລະສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກຂຶ້ນຈະຖືວ່າ ເຫັນດີຕາມທີ່ສະເໜີໃນກອງປະຊຸມ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ ຢ່າງຈະແຈ້ງແລ້ວ, ຊຶ່ງບໍລິສັດ ໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງ ກ່າວນັ້ນໄວ້ແລ້ວ.
4) ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນນັ້ນ ແມ່ນໃຫ້ຜູ້ຕາງໜ້າລົງຄະ ແນນ ສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນທີ່ໄດ້ລະບຸໄວ້ໃນໃບມອບສັນທະນັ້ນ,

2. ການນັບ ແລະການແຈ້ງຜົນການລົງຄະແນນສຽງ

1) ທ່ານ ຈະໄດ້ຮັບແຈ້ງ ກ່ຽວກັບຜົນການ ນັບຄະແນນຢູ່ໃນທີ່ປະຊຸມເລີຍ,ໂດຍການນັບຄະແນນສຽງ ຈະຖື ເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
2) ອີງຕາມມາດຕາ 148 ຂອງກົດໝາຍວ່າດ້ວຍລັດວິສາຫະກິດ ຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນ ຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນທັງໝົດໃນທີ່ປະຊຸມຈຶ່ງຈະມີຜົນສັກສິດ
3) ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະ ຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າທີ່ມາເຂົ້າຮ່ວມກອງປະຊຸມ ແລະລົງ ຄະແນນສຽງໃນແຕ່ລະວາລະ.
4) ທ່ານ ສິນທະນູ ສົມພອງບຸດຕະຂັນ ຜູ້ຄວບຄຸມຄະແນນກອງປະຊຸມຈະປະກາດຜົນການລົງຄະແນນສຽງ ໃນແຕ່ລະວາລະໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນລົງ ໂດຍຈະ ແຍກຄະແນນເຫັນດີ ແລະບໍ່ເຫັນດີເປັນຈຳນວນສຽງ ແລະເປັນຈຳນວນຈັກສ່ວນຮ້ອຍ,

5) ສໍາລັບຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກທີ່ຜູ້ຄວບຄຸມຄະແນນໄດ້ປະກາດຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນໍາເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບ ແລະກົດໝາຍທີ່ກ່ຽວຂ້ອງ ໃນກອງປະຊຸມຄັ້ງນີ້ແມ່ນບໍ່ອະນຸຍາດໃຫ້ຜູ້ສັງເກດການມີຄໍາຖາມໃນເວລາດໍາເນີນກອງປະຊຸມ ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄໍາຖາມ ແລະປະ ກອບຄໍາເຫັນກ່ຽວກັບວາລະກອງປະຊຸມ,

III. ສະເໜີວາລະຂອງການປະຊຸມ

ວາລະທີ 1 : ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2019.

ວາລະທີ 2 : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2019.

ວາລະທີ 3 : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປີ 2020.

ວາລະທີ 4 : ພິຈາລະນາ ແລະຮັບຮອງຜົນການດໍາເນີນທຸລະກິດປະຈໍາປີ 2020.

ວາລະທີ 5 : ພິຈາລະນາ ແລະຮັບຮອງບົດລາຍງານການເງິນປະຈໍາປີ 2020 ແລະບໍ່ຈ່າຍເງິນປັນຜົນ.

ວາລະທີ 6 : ພິຈາລະນາ ແລະຮັບຮອງການວ່າຈ້າງບໍລິສັດກວດສອບພາຍນອກປີ 2021.

ເວລາຕໍ່ມາ,ທ່ານ ຈ່າງລີ ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2020 ໂດຍມອບໃຫ້ຜູ່ທີ່ກ່ຽວຂ້ອງລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້ :

ວາລະທີ 1 : ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ2019

ຮອງຜູ້ອໍານວຍການ ບໍລິສັດ (ທ່ານ ວິຈິດ ສຸວັນນະລາດ) ໄດ້ລາຍງານມະຕິກອງປະຊຸມຜູ້ຖືຮຸ້ນສາມັນປະຈໍາປີຜ່ານມາໃຫ້ບັນດາຜູ້ຖືຮຸ້ນຮັບຊາບ ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄໍາຄິດເຫັນ ແຕ່ຜູ້ຖືຮຸ້ນບໍ່ມີການສອບຖາມ ສ່ວນວາລະນີ້ບໍ່ໄດ້ມີການລົງຄະແນນສຽງ ລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ.

ວາລະທີ 2 : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2019

ຮອງຜູ້ອໍານວຍການ ບໍລິສັດ (ທ່ານ ວິຈິດ ສຸວັນນະລາດ) ໄດ້ລາຍງານບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2019 ໃຫ້ບັນດາຜູ້ຖືຮຸ້ນຮັບຊາບ,ດັ່ງມີລາຍລະອຽດໃນ **<u>ເອກະສານຄັດຕິດ 02,</u>** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄໍາຄິດເຫັນ, ແຕ່ຜູ້ຖືຮຸ້ນທ່ານໃດປະກອບຄໍາຄິດເຫັນ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີຈໍານວນ 35,591,000 ສຽງ ເທົ່າກັບ 100%, ບໍ່ເຫັນດີຈໍານວນ 0 ສຽງ ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3 : ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປີ 2020

ຮອງຜູ້ອໍານວຍການ ບໍລິສັດ (ທ່ານ ວິຈິດ ສຸວັນນະລາດ) ໄດ້ລາຍງານບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປີ 2020 ໃຫ້ບັນດາຜູ້ຖືຮຸ້ນຮັບຊາບ,ດັ່ງມີລາຍລະອຽດໃນ **<u>ເອກະສານຄັດຕິດ 03,</u>** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານ ບຊລ ກໍໄດ້ຮັບຮອງ

ຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ຜູ້ຖືຮຸ້ນທ່ານໃດປະກອບຄຳຄິດເຫັນ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100%, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4 : ພິຈາລະນາ ແລະຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2020

ຜູ້ອຳນວຍການບໍລິສັດ (ທ່ານ ຈ່າງລີ້) ໄດ້ລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນການສຳເລັດຂອງທຸລະກິດຂອງບໍລິສັດ ໃນຜ່ານມາ ດັ່ງມີລາຍລະອຽດໃນ **<u>ເອກະສານຄັດຕິດ 04:</u>** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິ ຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ, ແຕ່ຜູ້ຖືຮຸ້ນທ່ານໃດປະກອບຄຳຄິດເຫັນ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100%, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5 : ພິຈາລະນາ ແລະຮັບຮອງບົດລາຍງານການເງິນປະຈຳປີ 2020 ແລະບໍ່ຈ່າຍເງິນປັນຜົນ

ຫົວໜ້າພະແນກບັນຊີ - ການເງິນ (ທ່ານ ຈ່າງຢົ່ງຟູ) ໄດ້ສະເໜີຕໍ່ທີ່ປະຊຸມ ພິຈາລະນາ ແລະຮັບຮອງ ກ່ຽວກັບບົດລາຍງານການເງິນປະຈຳປີ 2020 ແລະບໍ່ຈ່າຍເງິນປັນຜົນ. ດັ່ງມີລາຍລະອຽດໃນ **<u>ເອກະສານຄັດຕິດ 05</u>** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະ ກອງປະຊຸມສະພາບໍລິຫານ ກໍໄດ້ຮັບຮອງຄວາມຖືກຕ້ອງ,ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ.

ທ່ານ ຫຼີຫຼີງ ໃນນາມຜູ້ຖືຮຸ້ນສະເໜີຕໍ່ກອງປະຊຸມວ່າ ອີງຕາມສະພາບເງິນທຶນຂອງບໍລິສັດໃນປັດຈຸບັນ ບໍລິສັດຍັງສາມາດດຳເນີນທຸລະກິດແບບປົກກະຕິບໍ.

ທ່ານ ຈ່າງຢົ່ງຟູ ຫົວໜ້າພະແນກບັນຊີ-ການເງິນຕອບວ່າ ເງິນທຶນຂອງບໍລິສັດໃນປັດຈຸບັນສາມາດດຳເນີນທຸລະກິດແບບປົກກະຕິ. ຜູ້ຖືຮຸ້ນອື່ນບໍ່ມີການສອບຖາມ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100%, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6 : ພິຈາລະນາ ແລະຮັບຮອງການວ່າຈ້າງບໍລິສັດກວດສອບພາຍນອກ

ຫົວໜ້າພະແນກບັນຊີ - ການເງິນ (ທ່ານ ຈ່າງຢົ່ງຟູ) ໄດ້ສະເໜີຕໍ່ທີ່ປະຊຸມພິຈາລະນາ ແລະຮັບຮອງກ່ຽວກັບການວ່າຈ້າງບໍລິສັດກວດສອບພາຍນອກດັ່ງມີລາຍລະອຽດໃນ **<u>ເອກະສານຄັດຕິດ 06</u>** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ໄດ້ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະ ກອງປະຊຸມສະພາບໍລິຫານກໍໄດ້ຮັບຮອງຄວາມຖືກຕ້ອງ,ຄົບຖ້ວນແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ. ແຕ່ຜູ້ຖືຮຸ້ນທ່ານໃດປະກອບຄຳເຫັນ.

ຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີຈຳນວນ 35,591,000 ສຽງ ເທົ່າກັບ 100%, ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຜ່ານການລາຍງານໃນກອງປະຊຸມສາມັນຜູ້ຖືຮຸ້ນມີທັງໝົດ 6 ວາລະ ແລະ 1 ວາລະ ບໍ່ໄດ້ມີການລົງຄະແນນສຽງ ແມ່ນຜ່ານໄປດ້ວຍຜົນສຳເລັດອັນຈົບງາມ.

ຈາກນັ້ນ, ປະທານກອງປະຊຸມໄດ້ກ່າວຂອບໃຈບັນດາທ່ານຄະນະປະທານ ຜູ້ຖືຮຸ້ນ ກຳມະການສະພາບໍລິຫານ ແລະແຂກທີ່ມີກຽດທຸກທ່ານ ພ້ອມກ່າວປິດກອງປະຊຸມໃນເວລາ 11:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລ໊ີ

ຜູ້ບັນທຶກ

ຈ້າວ ປິ່ງປິ່ນ

ໝາຍເຫດ : ບົດບັນທຶກສະບັບນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ

ເອກະສານຄັດຕິດ : 3

ບົດລາຍງານ
ສະພາບການດຳເນີນທຸລະກິດປີ 2021 ຂອງບໍລິສັດ ບຊລ

I. ສະພາບຄວາມເປັນມາກ່ຽວກັບທຸລະກິດຂອງບໍລິສັດ:

ບໍລິສັດ ຊີມັ່ງລາວ ມະຫາຊົນ (ບຊລ ຫຼື LCC) ໄດ້ປ່ຽນສະຖານະມາຈາກ ບໍລິສັດ ຊີມັ່ງລາວ ຈຳກັດ ໃນເມື່ອກ່ອນ ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1998 ໂດຍການຮ່ວມມືຂອງບໍລິສັດ ຮ່ວມມືສາກົນດ້ານເສດຖະກິດເຕັກນິກຢຸນນານ (CYC) ແຫ່ງ ສ.ປ.ຈີນ ແລະລັດວິສາຫະກິດ ພັດທະນາກະສິກຳອຸດສາຫະກຳ ແລະບໍລິການຂາອອກ - ຂາເຂົ້າ (DAI) ຂອງ ສ.ປ.ປ.ລາວ, ໃນອັດຕາສ່ວນການລົງທຶນ 60% (CYC) ແລະ DAI 40% ດ້ວຍທຶນຈົດທະບຽນໃນເບື້ອງຕົ້ນ 1,100,000 ໂດລາສະຫະລັດ, ໂດຍຈຸດປະສົງຫຼັກ ເພື່ອສ້າງໂຮງງານຜະລິດ ແລະຈຳໜ່າຍຊີມັ່ງທົດແທນການນຳເຂົ້າ, ໂດຍໄດ້ຮັບເງິນກູ້ຢືມຈາກ ລັດຖະບານຈີນ ຈຳນວນ 269,612,040 ຢວນ (ສະກຸນເງິນຈີນ), ຊຶ່ງໃນເວລານັ້ນທຽບເທົ່າ 32,561,841 $ (ໂດລາສະຫະລັດ), ຊຶ່ງມາຮອດທ້າຍປີ 2014 ທາງບໍລິສັດ ໄດ້ສຳເລັດການຊຳລະຕົ້ນທຶນ ແລະດອກເບ້ຍເງິນກູ້ຢືມດັ່ງກ່າວທັງໝົດແລ້ວ.

ບໍລິສັດໄດ້ເລີ່ມກໍ່ສ້າງໂຮງງານຊີມັ່ງອັ່ງວຽງ ຫຼັງ II ໃນວັນທີ 26 /12/1999 ແລະສາມາດດຳເນີນການຜະລິດຢ່າງເປັນທາງການໃນວັນທີ 22/03/2002 ແລະໄດ້ສືບຕໍ່ທຳການຜະລິດ ແລະຈຳໜ່າຍຊີມັ່ງກາກະທິງທອງ ຕາມມາດຕະຖານອະເມລິກາ ASTM-C-150, ມາດຕະຖານແຫ່ງຊາດ ສ.ປ.ຈີນ GB-175:2007, ຊຶ່ງມີຜະລິດຕະພັນ 03 ປະເພດຄື: ຊີມັ່ງກາກະທິງທອງແດງ, ກະທິງທອງຟ້າ ແລະກະທິງທອງຂຽວ. ການຜະລິດຊີມັ່ງຂອງບໍລິສັດ ໄດ້ນຳໃຊ້ວັດຖຸດິບພາຍໃນທັງໝົດ ເປັນຕົ້ນແມ່ນຫີນປູນ, ດິນໜຽວ, ຊາຍພູ, ຫີນກາວ ແລະຖ່ານຫີນ.

ມາຮອດປີ 2013 ລັດຖະບານ ສ.ປ.ປ.ລາວ ໄດ້ປັບປຸງອັດຕາການຖືຮຸ້ນຂອງບໍລິສັດຄືນໃໝ່ຄື: ບໍລິສັດ ຮ່ວມມືສາກົນດ້ານເສດຖະກິດ ເຕັກນິກຢຸນນານ (CYC) ຖືຮຸ້ນ 51% ແລະລັດວິສາຫະກິດພັດທະນາກະສິກຳອຸດສາຫະກຳ ແລະບໍລິການຂາອອກ - ຂາເຂົ້າ (DAI) ຖືຮຸ້ນ 49%, ມາຮອດປະຈຸບັນ ຫຼັງຈາກໄດ້ປ່ຽນສະຖານະເປັນ ບໍລິສັດມະຫາຊົນ ແລະຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນວັນທີ 02/03/2018 ອັດຕາການຖືຮຸ້ນປ່ຽນມາເປັນ CYC ຖືຮຸ້ນ 35,6964%, DAI ຖືຮຸ້ນ 34,2966%, ຂາຮຸ້ນຜູ້ກໍ່ຕັ້ງບໍລິສັດ 0,007% ແລະມວນຊົນທົ່ວໄປ 30%.

II. ຂໍ້ມູນທົ່ວໄປຂອງບໍລິສັດ

- ຊື່ບໍລິສັດ: ບໍລິສັດ ຊີມັ່ງລາວ ມະຫາຊົນ
- ສຳນັກງານຕັ້ງຢູ່: ບ້ານໂພນພະເນົາ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ໂທລະສັບ 021 451116 ແຟັກ: 021 451117

- Website: WWW.LAOCEMENT.COM
- ໂຮງງານ: ໂຮງງານຊີມັງວັງວຽງ ຫຼັງທີ II.
- ທີ່ຢູ່: ບ້ານຂັນໝາກ, ເມືອງວັງວຽງ ແຂວງວຽງຈັນ.
- ໂທລະສັບ : 023 511245 ແຟັກ: 023 511247
- ກຳລັງການຜະລິດຕາມການອອກແບບ: 200,000 ໂຕນ/ປີ.
- ທຶນຈົດທະບຽນ 14,001,400,000 ກີບ

III <u>ວິໃສທັດ ແລະ ພາລະກິດ:</u>

1. ວິໃສທັດ:

   ສ້າງໃຫ້ເປັນບໍລິສັດທີ່ມີການຜະລິດປອດໄພໃສ່ໃຈຄຸນນະພາບ ເປັນມິດກັບສິ່ງແວດລ້ອມ, ພົວພັນຄູ່ຮ່ວມມືບົນພື້ນຖານຄວາມສະເໝີພາບ, ຕ່າງຝ່າຍມີຜົນປະໂຫຍດ ແລະພັດທະນາອຸດສາຫະ ກຳແບບຍືນຍົງ.

2. ພາລະກິດ:
   * ສະໜອງຊີມັງທີ່ມີຄຸນນະພາບຕາມມາດຕະຖານກຳນົດ, ສ້າງຄວາມໝັ້ນໃຈແກ່ຜູ້ຊົມໃຊ້.
   * ຮັບປະກັນການບໍລິການໃຫ້ລູກຄ້າມີຄວາມເພິ່ງພໍໃຈ.
   * ສ້າງເງື່ອນໄຂ ຫຼຸດຜ່ອນຕົ້ນທຶນຜະລິດ - ຈຳໜ່າຍ, ເພີ້ມປະສິດທິຜົນຂອງທຸລະກິດ.
   * ພັດທະນາບຸກຄະລາກອນດ້ານເຕັກນິກ-ອຸດສາຫະກຳ ຂອງບໍລິສັດໃຫ້ກາຍເປັນຊ່ຽວຊານໃນອະນາຄົດ.
   * ຍົກສູງປະສິດທິພາບໃນການບໍລິຫານຈັດການພາຍໃນອີງກອນຕາມມາດຕະຖານສາກົນ ISO:9001: 2015.

IV. <u>ສະພາບການດຳເນີນທຸລະກິດປີ 2021</u>

ໃນປີ 2021 ບໍລິສັດ ຊີມັງລາວ ມະຫາຊົນໄດ້ຜ່ານຜ່າຄວາມຫຍຸ້ງຍາກທາງດ້ານການແຜ່ລະບາດຂອງພະຍາດ ໂຄວິດ - 19, ພາຍໃຕ້ການສະໜັບສະໜຸນຈາກສະພາບໍລິຫານ ບໍລິສັດ ຊີມັງລາວ ມະຫາຊົນໄດ້ດາເນີນວຽກງານຕ່າງໆໄດ້ດີຕັ້ງແຕ່ການຢຸດຕິການຜະລິດ ແລະກໍໄດ້ພະຍາຍາມຊອກຫາວິທີທາງອອກເພື່ອປະກອບຮຸ້ນໃໝ່ ແລະ ປັບປຸງຟື້ນຟູທຸລະກິດຂອງບໍລິສັດ ເຊິ່ງມີລາຍລະອຽດດັ່ງນີ້:

1. ການຊຸກຍຸ້ວຽກງານການປະກອບຮຸ້ນໃໝ່ຂອງບໍລິສັດ: ຮ່ວມມືກັນກັບຜູ້ຖືຮຸ້ນຂາໃຫຍ່ພະຍາຍາມຊອກຫາຜູ້ລົງທຶນໃໝ່ທີ່ສົນໃຈຢາກຊື້ຮຸ້ນຂອງບໍລິສັດ ແລະຜູ້ລົງທຶນໃໝ່ໄດ້ເຊັນສັນຍາເຈດຈຳນົງການໂອນຮຸ້ນກັບຜູ້ຖືຮຸ້ນຂາໃຫຍ່ທີ 1 ແລະຂາໃຫຍ່ທີ 3 ຂອງບໍລິສັດ ເຊິ່ງເປັນບໍລິສັດຢຸນນານສາກົນ ແລະບໍລິສັດຫຼັກຊັບລາວ - ຈີນ, ປັດຈຸບັນນີ້, ກຳລັງຊຸກຍຸ້ການພິຈາລະນາ ແລະການອະນຸມັດຈາກພາກສ່ວນກ່ຽວຂ້ອງຂອງລັດຖະບານທາງຝ່າຍລາວ ແລະຝ່າຍຈີນຕໍ່ວຽກງານການປະກອບຮຸ້ນໃໝ່ຂອງບໍລິສັດ.

2. ການເອົາວຽກການທວງໜີ້ເປັນວຽກອັນສຳຄັນ: ຮອດປີ 2021 ລູກຄ້າທີ່ມີໜີ້ຄ້າງຈ່າຍໄດ້ຫຼຸດລົງ 15 ແຫ່ງ, ການທວງໜີ້ໃນປີນີ້ສະສົມມີຈຳນວນ 14,184 ຕື້ກີບ, ໜີ້ຕ້ອງເກັບຍັງເຫຼືອ 17,572 ຕື້ກີບ.

3. ການຊຳລະໜີ້ຕ້ອງສິ່ງເພື່ອຫຼີກລ່ຽງການຝ່າຝືນຕໍ່ສັນຍາ ແລະຄວາມສ່ຽງໃນການຮ້ອງຟ້ອງ:

3.1 ຮອດທ້າຍເດືອນ ກຸມພາ ປີ 2022 ບໍລິສັດໄດ້ຈ່າຍ 30% ຂອງເງິນອຸກໜູນອອກການໃຫ້ພະນັກງານທີ່ອອກການເປັນ 2 ງວດ ແລະກຳໄດ້ເຊັນແຜນການເບີກຈ່າຍເງິນອຸດໜູນອອກການກັບຜູ້ຖືຮຸ້ນຂາໃຫຍ່ ແລະພາກສ່ວນກ່ຽວຂ້ອງຂອງລັດຖະບານ.

3.2 ຮອດທ້າຍເດືອນ ກຸມພາ ປີ 2022 ບໍລິສັດໄດ້ຊຳລະເງິນກູ້ຢືມທະນາຄານໄດ້ສຳເລັດ.

3.3 ບໍລິສັດໄດ້ແກ້ໄຂໜີ້ຄ້າງຈ່າຍທີ່ຕິດກັບຜູ້ສະໜອງສິນຄ້າ ແລະບໍລິການຂົນສົ່ງເປັນພື້ນຖານ.

4. ບໍລິສັດໄດ້ຈັດກອງປະຊຸມສະພາບໍລິຫານເປັນ 4 ຄັ້ງ ແລະກອງປະຊຸມຜູ້ຖືນຮຸ້ນເປັນ 1 ຄັ້ງໃນປີນີ້ໄດ້ພິຈາລະນາ ແລະຮັບຮອງເອົາວຽກງານສຳຄັນຕ່າງໆຂອງບໍລິສັດ ເຊັ່ນວຽກງານການປະກອບຮຸ້ນໃໝ່ຂອງບໍລິສັດ, ປະຕິບັດໜ້າທີ່ການເປີດເຜີຍຂໍ້ມູນ ແລະບົດລາຍງານການເງິນຢ່າງຕັ້ງໜ້າ, ໄດ້ຮັບອະນຸມັດຈາກຄະນະອຳນວນການຄຸ້ມຄອງຫຼັກຊັບ ແລະຕະຫຼາດຫຼັກຊັບ ສາມາດໃຫ້ໄລຍະເວລາ 5 ປີແກ່ບໍລິສັດຮັກສາຖານະເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບເພື່ອດຳເນີນວຽກງານການປະກອບຮຸ້ນໃໝ່ຂອງບໍລິສັດ.

5. ອີງຕາມການຊີ້ນຳຈາກສະພາບໍລິຫານ ບໍລິສັດໄດ້ຊຳລະສະສາງເຄື່ອງໃນສາງໂດຍຜ່ານການຊອກຫາຜູ້ຊື້ເພື່ອເກັບຄືນເງິນທຶນ ແລະກຳໄດ້ຫຼຸດຜ່ອນພະນັກງານຈຳນວນໜຶ່ງພ້ອມເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍແຮງງານຂອງບໍລິສັດ.

6. ຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະການປ້ອງກັນພະຍາດໂຄວິດ - 19ໄດ້ດີ, ພະນັກງານ ທີ່ມາປະ ຈຳການໃນບໍລິສັດໄດ້ສັກຢາວັກຊີນເຂັມທີ 3 ໝົດທຸກຄົນ ບໍ່ເຄີຍມີພະນັກງານຕິດພະຍາດຈັກຄົນ, ສ່ວນໂຮງງານໄດ້ເພີ່ມທະວີວຽກການປ້ອງກັນ, ປັບການເວນຍາມຂອງທະຫານ ເພື່ອຮັບປະກັນຄວາມປອດໄພຂອງຊີ ວິດ ແລະຊັບສິນ.


V. <u>ການຈັດຕັ້ງປະຕິບັດວຽກງານໃນປີ 2021</u>

1. ສືບຕໍ່ວຽກການສະສາງ ແລະເກັບໜີ້ຕ້ອງຮັບໃຫ້ໄດ້ຮັບຜົນດີ, ເພີ່ມທະວີກຳລັງແຮງໃນການເກັບໜີ້ສິນ, ເບີກຈ່າຍເງິນອຸດໜູນອອກການຈັດສັນພະນັກງານໃຫ້ໄດ້ດີ, ພະຍາຍາມຫຼຸດຜ່ອນຄວາມສ່ຽງຮ້ອງຟ້ອງ ແລະຂໍ້ຂັດແຍ່ງຕ່າງໆ.
2. ປະສານສົມທົບກັບຜູ້ຖືຮຸ້ນແຕ່ລະຝ່າຍ, ລາຍງານ ແລະປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ, ພະຍາຍາມຊຸກຍູ້ ແລະປະຕິບັດວຽກການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງບໍລິສັດ.
3. ຮັບປະກັນວຽກທາງດ້ານຄວາມປອດໄພ ແລະວຽກປ້ອງກັນພະຍາດໂຄວິດ-19 ໃຫ້ດີ.

VI. ภ<u>ิ</u>ารจัดการจัดตั้ง

- **โครงร่างการจัดตั้ง :**

โครงร่างการจัดตั้งของ บໍລິສັດຊີມັ່ງລາວ ມະຫາຊົນ ປະກອບດ້ວຍສະພາບໍລິຫານ 10 ທ່ານ (ໃນນັ້ນ ສະມາຊິກສະພາບໍລິຫານອິດສະຫຼະ 03 ທ່ານ), ຄະນະຜູ້ອໍານວຍການຈໍານວນ 03 ທ່ານ ແລະ ມີ 03 ພະແນກການ.



ຄະນະສະພາບໍລິຫານຂອງບໍລິສັດ ຊິມັງລາວ ມະຫາຊົນ



ທ່ານ ຢາງຊຸນຢິງ
ປະທານ ສະພາບໍລິຫານ



ທ່ານ ວັນທອງ ສິດທິກຸນ
ຮອງປະທານສະພາບໍລິຫານ



ທ່ານ ອູຢາງ ຈີຢິງ
ຮອງປະທານສະພາບໍລິຫານ



ທ່ານ ຈ່າງລີ້
ກຳມະການສະພາບໍລິຫານ



ທ່ານ ຄຳບົນ ໄຊເລົ່າວົງ

ສະມາຊິກ ສະພາບໍລິຫານ



ທ່ານ ວິຈິດ ສຸວັນນະລາດ

ສະມາຊິກ ສະພາບໍລິຫານ




ທ່ານ ເຈ້ຍ ຢ້າວຊີ

ສະມາຊິກ ສະພາບໍລິຫານ



ທ່ານ ສ້ຽວເຈ

ສະມາຊິກສະພາບໍລິຫານ ອົດສະຫຼະ



ທ່ານ ຫຼີຊຸນໂປ
ສະມາຊິກສະພາບໍລິຫານ ອິດສະຫຼະ



ທ່ານ ວົງວິຈິດ ແກ້ວວົງກົດ
ສະມາຊິກສະພາບໍລິຫານ ອິດສະຫຼະ

ຄະນະອຳນວຍການ ຂອງບໍລິສັດ ຊິມັງລາວ ມະຫາຊົນ



ທ່ານ ຈ່າງລີ້
ຜູ້ອຳນວຍການ ບໍລິສັດ



ທ່ານ ວິຈິດ ສຸວັນນະລາດ
ຮອງຜູ້ອຳນວຍການ ບໍລິສັດ



ທ່ານ ເຈ້ຍ ຢ້າວຊີ
ຮອງຜູ້ອຳນວຍການ ບໍລິສັດ

ຜູ້ລາຍງານ

ທ່ານ ຈ່າງລີ້

ເອກະສານຕິດຄັດ : 04

ບົດລາຍງານວຽກງານ
ການເງິນຂອງ ບໍລິສັດ ປະຈຳປີ 2021

I. ສະພາບການດຳເນີນທຸລະກິດ ປີ 2021

ເນື່ອງຈາກບໍລິສັດໄດ້ຢຸດຕິການຜະລິດ ບໍ່ມີລາຍຮັບຈາກການດຳເນີນທຸລະກິດຫຼັກໃນປີ 2021 ແລະຂາດທຶນ 21,592,705,664 ກີບ ເຊິ່ງມີລາຍລະອຽດດັ່ງນີ້:

1. ຄ່າໃຊ້ຈ່າຍການດຳເນີນທຸລະກິດ ຈຳນວນ 12,587,600,696 ກີບ ລວມມີຄ່າຫັກຫຼ້ຍຫ້ຽນຊັບສິນບັດຄົນທີ່ ຈຳນວນ 6,041,190,590 ກີບ, ຄ່າສູນເສຍມູນຄ່າຂອງສິນຄ້າໃນສາງ ຈຳນວນ 4,382,638,682ກີບ, ຄ່າແຮງງານ ຈຳນວນ 808,242,389 ກີບ, ຄ່າໄຟ ແລະຄ່ານ້ຳມັນເຊື້ອໄຟຈຳນວນ 182,113,576 ກີບ, ຄ່າໃຊ້ຈ່າຍອື່ນ ຈຳນວນ 1,173,415,459 ກີບ.

2. ໜີ້ຕ້ອງຮັບທ່ວງຍາກ ຈຳນວນ 3,406,151,417 ກີບ.

3. ຄ່າໃຊ້ຈ່າຍໃນການບໍລິຫານ ຈຳນວນ 4,856,312,762 ກີບ ລວມມີຄ່າຕົ້ນທຶນແຮງງານ ຈຳນວນ 3,445,419,539 ກີບ, ຄ່າໃຊ້ຈ່າຍອື່ນໃນການເດີນທາງອອກວຽກ ຄ່າໃຊ້ຈ່າຍໃນການດຳເນີນງານ ແລະຄ່າໃຊ້ຈ່າຍສຳລັບບໍລິສັດນາຍໜ້າ ທັງໝົດມີຈຳນວນ 1,410,893,223 ກີບ.

4. ລາຍຮັບຈາກກຳໄລ ຈຳນວນ 1,005,65 ກີບ, ຄ່າໃຊ້ຈ່າຍໃນການເງິນ ຈຳນວນ 891,203,554 ກີບ ລວມມີຄ່າດອກເບ້ຍເງິນກູ້ທະນາຄານລາວ - ຈີນ ຈຳນວນ 323,888,888 ກີບ, ເສຍຫາຍຈາກການແລກປ່ຽນເງິນຕາຍ້ອນການປ່ຽນແປງຂອງອັດຕາແລກປ່ຽນ ຈຳນວນ 567,314,666 ກີບ.

II. ສະພາບການເງິນ ປີ 2021

ລາຍການ	ເງິນກີບ	ເງິນໂດລາ	ລາຍການ	ເງິນກີບ	ເງິນໂດລາ
ເງິນຝາກ ແລະເງິນສົດ	351,792,791	31,455	ເງິນກູ້ຢືມໄລຍະສັ້ນ	2,000,000,000	178,827
ເຄື່ອງໃນສາງ	20,801,679,743	1,859,950	ໜີ້ຕ້ອງຈ່າຍ	8,093,154,143	723,637
ໜີ້ຕ້ອງຮັບ	12,239,495,443	1,094,375	ເງິນເດືອນຕ້ອງຈ່າຍ	9,494,267,488	848,915
ໜີ້ຕ້ອງຮັບອື່ນໆ	38,921,847	3,480	ອາກອນຕ້ອງຈ່າຍ	5,210,837,226	465,919
ຊັບສິນໝຸນ ວຽນອື່ນໆ	18,000,000	1,609	ເງິນຕ້ອງຈ່າຍອື່ນ	14,320,721,709	1,280,465
ຊັບສິນໝຸນວຽນລວມ	**33,449,889,824**	**2,990,870**	**ໜີ້ຕ້ອງສົ່ງລວມ**	**39,118,980,566**	**3,497,763**
ຊັບສິນບໍ່ໝຸນວຽນລວມ	**16,896,473,008**	**1,510,772**	**ທຶນເຈົ້າຂອງທຸລະກິດລວມ**	**11,227,382,266**	**1,003,879**
ຊັບສິນລວມ	**50,346,362,832**	**4,501,642**	**ໜີ້ສິນ ແລະທຶນເຈົ້າຂອງທຸລະກິດລວມ**	**50,346,362,832**	**4,501,642**

ລາຍລະອຽດແມ່ນຢູ່ໃນບົດລາຍງານການກວດສອບ 31/12/2021 ອັດຕາແລກປ່ຽນ $:Kip=1:11184

ຮອດທ້າຍປີ 2021 ບໍລິສັດມີຊັບສິນທັງໝົດ ຈຳນວນ 50,346,362,832 ກີບ ທຽບໃສ່ປີ 2020 ໄດ້ຫຼຸດລົງຈຳນວນ 39%, ສາເຫດຕົ້ນຕໍແມ່ນມາຈາກການເກັບໜີ້ສິນ ແລະສະສາງເຄື່ອງໃນສາງ, ປີ 2021 ມີໜີ້ຕ້ອງ

ຮັບສຸດທິຈຳນວນ 12,239,495,443 ກີບ ທຽບໃສ່ປີ 2020 ໄດ້ຫຼຸດລົງ 59%, ສາເຫດຕົ້ນຕໍທີ່ເຮັດໃຫ້ໜີ້ສິ້ນຫຼຸດລົງແມ່ນຍ້ອນໄດ້ເກັບຄືນຄ່າຊີມັງຈຳນວນໜຶ່ງຈາກເຂື່ອນໄຟຟ້າກົມ 14, ບໍລິສັດຫຼົງຊິງ ແລະລູກຄ້າອື່ນໆ.

ໜີ້ຕ້ອງສົ່ງທັງໝົດ ຈຳນວນ 39,118,980,566 ກີບ ທຽບໃສ່ປີ 2020 ໄດ້ຫຼຸດລົງ 21%, ສາເຫດຕົ້ນຕໍແມ່ນຍ້ອນໄດ້ຊຳລະເງິນກູ້ທະນາຄານ, ເບີກຈ່າຍເງິນອຸນໜູນອອກການ, ຈ່າຍຄ່າຖ່ານຫີນ ແລະຄ່າຂົນສົ່ງຈຳນວນໜຶ່ງ, ທຶນເຈົ້າຂອງທຸລະກິດຈຳນວນ 11,227,382,266 ກີບ, ທຽບໃສ່ປີ 2020 ໄດ້ຫຼຸດລົງຈານວນ 66%, ສາເຫດຕົ້ນຕໍທີ່ຫຼຸດລົງແມ່ນຍ້ອນການຢຸດຕິການຜະລິດ.

ຮອດທ້າຍປີ 2021 ອັດຕາສ່ວນໜີ້ສິນຕໍ່ຊັບສິນມີຈຳນວນ 77.7% ທຽບໃສ່ປີກາຍແມ່ນເພີ່ມຂຶ້ນຫຼາຍ ສາເຫດຕົ້ນຕໍແມ່ນຍ້ອຍການຕົກລົງເບີກຈ່າຍເງິນອຸນໜູນອອກການ.

III. <u>ສະພາບການເງິນທຶນຂອງບໍລິສັດ</u>

ຮອດວັນທີ 31/12/2021 ບໍລິສັດມີເງິນຝາກ ແລະເງິນສົດຈານວນ 351,792,791 ກີບ.

ໃນປີ 2021 ຜ່ານຜາຄວາມຫຍຸ້ງຍາກຈາກການແຜ່ລະບາດຂອງໂຄວິດ - 19 ບໍລິສັດໄດ້ເກັບໜີ້ຕ້ອງຮັບ ຈຳນວນ14.2 ຕື້ກີບ, ໄດ້ຈ່າຍດອກເບ້ຍເງິນກູ້ທະນາຄານລາວ - ຈີນ ຈຳນວນ 6 ຕື້ກີບ, ໄດ້ຈ່າຍຄ່າຖ່ານຫີນ 3.6 ຕື້ກີບ, ໄດ້ຈ່າຍ 20% ຂອງເງິນອຸນໜູນອອກການ ຈຳນວນ 2.2 ຕື້ກີບ.

ຄ່າດອກເບ້ຍເງິນກູ້ທະນາຄານງວດ 2 ຕື້ກີບໄດ້ຊຳລະໃຫ້ໝົດໃນໄຕມາດທີ 1 ປີ 2022 ແລະບໍ່ມີໜີ້ຄ້າງຈ່າຍທະນາຄານອີກ.

IV.<u>ແຜນການປັນຜົນ</u>

ໃນປີ 2021 ບໍລິສັດໄດ້ຢຸດຕິການຜະລິດ ແລະມີການຂາດທຶນການດຳເນີນທຸລະກິດ ເຮັດໃຫ້ບໍ່ມີກຳໄລທີ່ຈະສາມາດປັນຜົນໃຫ້ແກ່ຜູ້ຮຸ້ນ ສະນັ້ນ, ຈະບໍ່ໄດ້ປັນຜົນໃຫ້ແກ່ຜູ້ຖືຮຸ້ນໃນປີ 2021.

V. <u>ການຈັດຕັ້ງປະຕິບັດວຽກງານໃນປີ 2022</u>

1. ຈັດສັນເງິນທຶນຂອງບໍລິສັດຕາມຄວາມເໝາະສົມ, ຄຸ້ມຄອງການນຳໃຊ້ເງິນທຶນຂອງບໍລິສັດໃຫ້ດີ, ເບີກຈ່າຍເງິນອຸດໜູນອອກການໃຫ້ພະນັກງານຕາມແຜນການ, ຮັກສາການດຳເນີນກິດຈະການຂອງບໍລິສັດເປັນປົກກະຕິ.

2. ປະຕິບັດໜ້າທີ່ວຽກກ່ຽວກັບການສ້າງບົດລາຍງານການເງິນ ແລະການເປີດເຜີຍຂໍ້ມູນໃຫ້ດີໃນໄລຍະເວລາຢຸດຕິການຜະລິດ.

3. ປະຕິບັດໜ້າທີ່ວຽກກ່ຽວກັບປະເມີນມູນຄ່າຊັບສິນໃນການປະກອບຮຸ້ນໃໝ່ຂອງບໍລິສັດໃຫ້ດີ.

ບົດລາຍການເງິນໄດ້ສິ້ນສຸດລົງພຽງເທົ່ານີ້ ສະເໜີໃຫ້ບັນດາຜູ້ຖືຮຸ້ນພິຈາລະນາ ແລະຮັບຮອງ.

ຜູ້ລາຍງານ ທ່ານ ຈ່າງຢົງຟູ

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຖານະທາງການເງິນ (ຕໍ່)
ນະວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	*31 ທັນວາ 2021*	*31 ທັນວາ 2020 (ປັບປຸງໃໝ່)*
		ກີບ	*ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ເງິນກູ້ຢືມ	12	2,000,000,000	8,000,000,000
ໜີ້ຕ້ອງສົ່ງການຄ້າ		2,211,807,006	4,751,971,174
ເງິນລ່ວງໜ້າຈາກລູກຄ້າ		152,773,000	152,773,000
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	25	5,728,574,137	5,834,035,151
ພັນທະອາກອນ	13	5,210,837,226	5,170,698,904
ໜີ້ຕ້ອງສົ່ງໃຫ້ພະນັກງານ		9,494,267,488	11,682,408,305
ໜີ້ຕ້ອງສົ່ງອື່ນໆ	14	14,320,721,709	13,645,892,550
ລວມໜີ້ສິນໝຸນວຽນ		**39,118,980,566**	**49,237,779,084**
ລວມໜີ້ສິນທັງໝົດ		**39,118,980,566**	**49,237,779,084**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	15	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(53,414,111,387)	(31,821,405,723)
ລວມທຶນ		**11,227,382,266**	**32,820,087,930**
ລວມໜີ້ສິນ ແລະ ທຶນທັງໝົດ		**50,346,362,832**	**82,057,867,014**

ທ່ານ ຈ່າງ ລີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	*2021* ກີບ	*2020 (ປັບປຸງໃໝ່)* ກີບ
ລາຍຮັບຈາກການຂາຍສິນຄ້າ	16	-	26,342,629,966
ຕົ້ນທຶນຈາກການຂາຍ	17	-	(50,100,648,288)
ຂາດທຶນຂັ້ນຕົ້ນ		**-**	**(23,758,018,322)**
ລາຍໄດ້ຈາກການດຳເນີນງານອື່ນໆ	18	147,557,115	355,106,778
ລາຍຈ່າຍຈາກການດຳເນີນງານອື່ນໆ	19	(12,587,600,696)	-
ເງິນແຮໝີ້ທວງຍາກ		(3,406,151,417)	(508,273,554)
ຕົ້ນທຶນຈາກການຂາຍ ແລະ ຈັດຈຳໜ່າຍ	20	-	(1,552,507,710)
ລາຍຈ່າຍໃນການດຳເນີນງານ	21	(4,856,312,762)	(9,553,883,985)
ຂາດທຶນຈາກການດຳເນີນງານ		**(20,702,507,760)**	**(35,017,576,793)**
ລາຍຮັບທາງການເງິນ	22	1,005,650	10,372,529
ຕົ້ນທຶນທາງການເງິນ	23	(891,203,554)	(990,187,011)
ຂາດທຶນກ່ອນອາກອນ		**(21,592,705,664)**	**(35,997,391,275)**
ລາຍຈ່າຍອາກອນກຳໄລ	24	-	-
ຂາດທຶນສຸດທິຫຼັງອາກອນພາຍໃນປີ		**(21,592,705,664)**	**(35,997,391,275)**

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2021

	ທຶນຈົດທະບຽນທີ່ ໄດ້ຖອກແລ້ວ *ກີບ*	*ມູນຄ່າຮຸ້ນ* *ກີບ*	*ຄັງສຳຮອງຕາມ ລະບຽບການ* *ກີບ*	*ຄັງສຳຮອງເພື່ອ ຂະຫຍາຍອາດານ* *ກີບ*	*ຂາດທຶນສະສົມ* *ກີບ*	*ລວມທັງໝົດ* *ກີບ*
ນະວັນທີ 1 ມັງກອນ 2020	20,002,000,000	18,385,975,511	7,704,052,546	18,549,465,596	4,175,985,552	68,817,479,205
ຂາດທຶນສຸດທິພາຍໃນປີ (ປັບປຸງໃໝ່)	-	-	-	-	(35,997,391,275)	(35,997,391,275)
ນະວັນທີ 31 ທັນວາ 2020 (ປັບປຸງໃໝ່)	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(31,821,405,723)**	**32,820,087,930**
ນະວັນທີ 1 ມັງກອນ 2021 (ປັບປຸງໃໝ່)	20,002,000,000	18,385,975,511	7,704,052,546	18,549,465,596	(31,821,405,723)	32,820,087,930
ຂາດທຶນສຸດທິພາຍໃນປີ	-	-	-	-	(21,592,705,664)	(21,592,705,664)
ນະວັນທີ 31 ທັນວາ 2021	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(53,414,111,387)**	**11,227,382,266**

ທ່ານ ຈ່າງ ລີ້
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

ບໍລິສັດ ຊີມັງລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບົດອະທິບາຍ ເລກທີ	2021 ກີບ	2020 ປັບປຸງໃໝ່ ກີບ
ກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(21,592,705,664)**	**(35,997,391,275)**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4	6,203,730,809	8,245,904,324
ເງິນຮອສຳລັບເຄື່ອງໃນສາງ	19	4,382,638,682	350,743,333
ເງິນຮອສຳລັບໜີ້ທວງຍາກ		3,406,151,417	508,273,554
ຂາດທຶນສຸດທິຈາກອັດຕາແລກປ່ຽນ		329,130,295	69,075,908
ກຳໄລຈາກກິດຈະກຳການລົງທຶນ		(1,005,650)	(10,372,529)
ລາຍຈ່າຍດອກເບ້ຍ	23	323,888,888	921,111,103
ການດັດແກ້ທຶນໝຸນວຽນ:			
ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ລວມ ທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນທີ່ກ່ຽວຂ້ອງ		14,250,860,222	19,349,317,567
ຫຼຸດລົງຂອງເຄື່ອງໃນສາງ		405,870,128	13,226,474,364
ຫຼຸດລົງຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ລວມທັງ ຈຳນວນໜີ້ຄ້າງຊຳລະໃຫ້ພາກສ່ວນທີ່ກ່ຽວຂ້ອງ		(4,192,522,218)	(7,939,582,676)
ລາຍຈ່າຍດອກເບ້ຍເງິນກູ້ຢືມ		(341,111,110)	(914,444,437)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳເນີນງານ		**3,174,925,799**	**(2,190,890,764)**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(2,050,000)	(445,429,814)
ໄດ້ຮັບດອກເບ້ຍ		1,005,650	10,372,529
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການລົງທຶນ		**(1,044,350)**	**(435,057,285)**
ກິດຈະກຳການເງິນ			
ການຮັບປະກັນຮຸ້ນ		-	-
ຈ່າຍເງິນປັນຜົນ		-	-
ດຳເນີນການກູ້ຢືມຈາກທະນາຄານ		-	8,000,000,000
ການຊຳລະເງິນກູ້ຢືມທະນາຄານ		(6,000,000,000)	(8,000,000,000)
ກະແສເງິນສົດສຸດທິຈາກກິດຈະກຳການເງິນ		**(6,000,000,000)**	**-**
ເງິນສົດຫຼຸດລົງສຸດທິ		(2,826,118,511)	(2,625,948,049)
ເງິນສົດໃນຕົ້ນປີ		3,416,095,713	6,042,043,762
ອັດຕາແລກປ່ຽນເງິນຕາຕ່າງປະເທດ		(238,184,371)	-
ເງິນສົດໃນທ້າຍປີ	**11**	**351,792,791**	**3,416,095,713**

ທ່ານ ຈ່າງ ສີ
ຜູ້ອຳນວຍການໃຫຍ່

ທ່ານ ວິໄຊ ດວງສະຫວັດ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

14 ເມສາ 2022

ເອກະສານຕິດຄັດ : 05

ແຜນປັບປຸງ ແລະ ຟື້ນຟູ ທຸລະກິດ ຂອງບໍລິສັດ ຊີມັງລາວ ມະຫາຊົນ

- ອີງຕາມຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ອະນຸກຳມະການຊ່ວຍວຽກ ເພື່ອສ້າງແຜນປັບປຸງ ແລະ ຟື້ນຟູ

ທຸລະກິດ ຂອງບໍລິສັດຊີມັງລາວ ມະຫາຊົນ ສະບັບເລກທີ 1731/ກປທ ລົງວັນທີ 22/03/2021 .

I. ຈຸດປະສົງ ແລະ ຄາດໝາຍ:

- ການສ້າງແຜນປັບປຸງ ແລະ ຟື້ນຟູທຸລະກິດ ບຊລ ສະບັບນີ້ ມີຈຸດປະສົງ ເພື່ອນຳເອົາທັດສະນະ ຄຳຄິດເຫັນ ຈາກຄະນະກຳມະການທີ່ມາຈາກພາກສ່ວນທີ່ກ່ຽວຂ້ອງ ປະກອບເປັນແຜນຟື້ນຟູ ແລະ ກຳນົດທິດທາງ ທີ່ສາມາດເປັນໄປໄດ້ ເພື່ອຊ່ວຍໃຫ້ບໍລິສັດຊີມັງລາວ ທີ່ຢູ່ໃນສະພາບວິກິດ ໃຫ້ສາມາດປັບປຸງ ຟື້ນຟູທຸລະກິດ ຂອງຕົນໃນອະນາຄົດອັນໃກ້ນີ້.
- ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດໃຫ້ແກ່ບໍລິສັດຊີມັງລາວມະຫາຊົນ ໂດຍສອດຄ່ອງຕາມລະບຽບ ການ ແລະກົດໝາຍທີ່ບັງຄັບໃຊ້ໃນ ສ.ປ.ປ.ລາວ ພ້ອມທັງ ຊ່ວຍໃຫ້ ບຊລ ບໍ່ຖືກຖອດຖອນອອກຈາກ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.
- ສ້າງບັນດາເງື່ອນໄຂພື້ນຖານ ແລະ ແວດລ້ອມທຸລະກິດ ເພື່ອສະໜັບສະໜູນ, ດຶງດູດຜູ້ລົງທຶນໃໝ່ ທີ່ເປັນ ບໍລິສັດໜຶ່ງດຽວທີ່ສະເໜີເຈດຈຳນົງໃນການພັດທະນາກິດຈະການຂອງ ບຊລ ໃຫ້ມີຄວາມໝັ້ນໃຈ ໃນການ ລົງທຶນໃນຂະແໜງ

ການທີ່ເໝາະສົມ, ທັງນີ້, ກໍເພື່ອຫຼີກລຽງບໍ່ໃຫ້ ບຊລ ກ້າວໄປເຖິງພາວະລົ້ມລະລາຍໃນອະນາຄົດ.

II. ສະພາບຄວາມເປັນມາຂອງບໍລິສັດ:

1. **ສະພາບການລົງທຶນ ແລະ ຖືຮຸ້ນ :** ບໍລິສັດ ຊີມັງລາວ ມະຫາຊົນ (ໂຮງງານຊີມັງວັງວຽງ ຫຼັງ2, ຊື່ເດີມ ແມ່ນບໍລິສັດ ຊີມັງລາວ ຈຳກັດ ຕໍ່ໄປນີ້ມີຊື່ຫຍໍ້ເອີ້ນວ່າ : ບຊລ), ຈົດທະບຽນ ແລະ ສ້າງຕັ້ງເປັນບໍລິສັດໃນ ປີ 1998. ເປັນບໍລິສັດຮ່ວມທຶນລະຫວ່າງ ບໍລິສັດ ການຮ່ວມມືສາກົນດ້ານເສດຖະກິດ ເຕັກນິກ ຢູນນານ ສປຈີນ ຈຳກັດ ຕໍ່ໄປນີ້ເອີ້ນວ່າ : ບໍລິສັດ ສາກົນຢູນນານ (CYC) ກັບ ລັດວິສາຫະກິດ ພັດທະນາກະສິ ກຳ ອຸດສາຫະກຳ ແລະ ບໍລິການຂາເຂົ້າ-ຂາອອກ (ທີ່ຂຶ້ນກັບກະຊວງປ້ອງກັນປະເທດ) ຕໍ່ໄປນີ້ເອີ້ນວ່າ : ລັດວິສາຫະກິດ ພກອ (DAI), ໃນການສ້າງຕັ້ງເບື້ອງຕົ້ນ ອັດຕາສ່ວນການຖືຮຸ້ນແມ່ນ ຝ່າຍຈີນ (CYC)ຖືຮຸ້ນ 60% ແລະ ຝ່າຍລາວ (DAI) ຖືຮຸ້ນ 40%, ໂດຍນຳໃຊ້ເງິນກູ້ແບບຜ່ອນຜັນ ຈາກ ລັດຖະບານຈີນເປັນຈຳນວນ 200 ລ້ານຢວນ. ໂຮງງານຊີມັງວັງວຽງຫລັງ 2 ກໍ່ສ້າງສາເລັດ ແລະ ເລີ່ມ ດຳເນີນການຜະລິດ ໃນເດືອນ 3/2002, ການອອກແບບກຳລັງການຜະລິດແມ່ນ 200,000ໂຕນ/ປີ, ເປັນສາຍການຜະລິດລະບົບເຕົາເຜົາແບບແຫ້ງ ຫຼັງທຳອິດ ຂອງ ສປປລາວ. ວັນທີ 01/01/2013 ໄດ້ເຊັນ ສັນຍາດັດແກ້ເພີ່ມເຕີມຂອງບໍລິສັດ ຊີມັງລາວ ຈຳກັດ ກັບລັດຖະບານລາວ ໃນການປ່ຽນແປງອັດຕາສ່ວນ ຖືຮຸ້ນເປັນ : ບໍລິສັດ ສາກົນຢູນນານ ຖືຮຸ້ນ 51% ແລະ ລັດວິສາຫະກິດ ພກອ ຖືຮຸ້ນ 49%. ເດືອນ 03/2018 ບໍລິສັດ ຊີມັງລາວ ໄດ້ຈົດທະບຽນຢູ່ຕະຫຼາດຫຼັກຊັບ ໂດຍໄດ້ປ່ຽນຊື່ເປັນ ບໍລິສັດ ຊີມັງລາວ ມະຫາຊົນ ຫລັງຈາກເຂົ້າຕະຫຼາດຫຼັກຊັບລາວ ອັດຕາສ່ວນການຖືຫຸ້ນມີການປ່ຽນແປງຄື : ບໍລິສັດຢູນນານ ສາກົນ ຖືຮຸ້ນຈຳນວນ 14,280,000 ຮຸ້ນ ເທົ່າກັບ 35,6964% ແລະລັດວິສາຫະກິດ ພກອ ຖືຮຸ້ນ ຈຳ ນວນ 13,720,000 ຮຸ້ນ ເທົ່າກັບ 34,2966 %, ບໍລິສັດຫຼັກຊັບລາວຈີນ ຈຳກັດ ຖືຮຸ້ນ ຈຳນວນ 7,547,800 ຮຸ້ນ ເທົ່າກັບ 18,8676%, ຜູ້ລົງທຶນລາຍຍ່ອຍ ຖືຮຸ້ນ 4,456,200 ຮຸ້ນ ເທົ່າກັບ

11,1394%. ມູນຄ່າການລົງທຶນທັງໝົດ 36,241,513 USD.

2. **ສະພາບລະບົບຈັດຕັ້ງ ແລະ ພະນັກງານ :**

- ສະພາບໍລິຫານ ບຊລ: ມີຈຳນວນ 10 ທ່ານ (ຝ່າຍຈີນ 6 ທ່ານ, ຝ່າຍລາວ 4 ທ່ານ) ປະກອບດ້ວຍ:

1) ທ່ານ ຢາງຊຸນຢິງ ປະທານ
2) ທ່ານ ອັນທອງ ສິດທິກຸນ ຮອງປະທານ
3) ທ່ານ ອູຢາງຊິຢິງ ຮອງປະທານ
4) ທ່ານ ຈາງລີ ສະມາຊິກ
5) ທ່ານ ເຈ້ຍຢ້າວຊີ ສະມາຊິກ
6) ທ່ານ ສຽວເຈ້ ສະມາຊິກອິດສະຫຼະ
7) ທ່ານ ຫຼີຊຸນໂປ ສະມາຊິກອິດສະຫຼະ
8) ທ່ານ ຄຳບົນ ໄຊເລົ່າວົງ ສະມາຊິກ
9) ທ່ານ ວິຈິດ ສຸວັນນະລາດ ສະມາຊິກ
10) ທ່ານ ວົງວິຈິດ ແກ້ວວົງກິດ ສະມາຊິກອິດສະຫຼະ.

- ຄະນະອຳນວຍການບໍລິສັດ: ມີຈຳນວນ 3 ທ່ານ (ຝ່າຍຈີນ 2 ທ່ານ, ຝ່າຍລາວ 1 ທ່ານ) ປະກອບດ້ວຍ:

1) ທ່ານ ຈ່າງລີ ຜູ້ອຳນວຍການ
2) ທ່ານ ວິຈິດ ສຸວັນນະລາດ ຮອງອຳນວຍການ.
3) ທ່ານ ເຈ້ຍາວຊີ ຮອງອຳນວຍການ.

- ຈຳນວນພະນັກງານ:

- ຮອດວັນທີ 31/7/2020 ບໍລິສັດ ມີພະນັກງານຢູ່ໃນບັນຊີລາຍຊື່ຈຳນວນ 276 ຄົນ ໃນນັ້ນ, ພະນັກງານຄົນຈີນ ຈຳນວນ 10 ຄົນ ແລະ ພະນັກງານຄົນລາວ ຈຳນວນ 266 ຄົນ.
- ພະນັກງານເກືອບທັງໝົດ ໄດ້ສະເໜີລາອອກຈາກການຈັດຕັ້ງ ເລີ້ມແຕ່ ວັນທີ 01/08/2020 ເປັນຕົ້ນມາ, ບໍລິສັດໄດ້ຮັກສາພະນັກງານໄວ້ຈຳນວນ 18 ຄົນ ມາປະຈຳການເພື່ອດຳເນີນວຽກງານຕ່າງໆ ສ່ວນພະນັກງານທີ່ເຫຼືອແມ່ນໄດ້ຢຸດເຮັດວຽກ ແລະ ລໍຖ້າການຈັດສັນຈ່າຍເງິນອຸດໜູນອອກການ.

3. **ສະພາບການຜະລິດ ແລະ ການດຳເນີນທຸລະກິດ** : ໂຮງງານຊີມັງວັງວຽງຫລັງ 2 (ບໍລິສັດ ຊີມັງລາວ ມະຫາຊົນ) ໄດ້ນຳວັດຖຸດິບທີ່ຂຸດຄົ້ນເອງ ເປັນຕົ້ນ ຫີນປູນ, ດິນໜຽວຂາວ, ດິນໜຽວແດງ ແລະ ຊາຍໜູ, ສ່ວນຖ່ານຫີນບໍ່ມີຄວັນ(Anthracite) ແລະ ຫີນກາວ ໄດ້ຈັດຊື້ຈາກພາກສ່ວນທາງນອກ. ນຳໃຊ້ເຕັກນິກເຕົາປີ່ນ, ການຜະລິດຊີມັງ ແລະ ກະລິງເກີ 700 ໂຕນ/ວັນ. ຄວາມສາມາດໃນການຜະລິດຊີມັງ ແມ່ນ 220,000 ໂຕນ/ປີ. ຜະລິດຕະພັນຕົ້ນຕໍ ແມ່ນຊີມັງປອດແລນກາກະທິງທອງ ປະເພດ I ແລະ ຊີມັງປະສົມກະທິງທອງ P-32.5 ໂດຍນຳໃຊ້ມາດຕະຖານ ASTM ຂອງອາເມລິກາ, ມາດຕະຖານຊີມັງ ລາວ (ມ.ລ) ແລະ ສ.ປ.ຈີນ (GB) .

ນັບແຕ່ກໍ່ສ້າງໂຮງງານຊີມັງວັງວຽງ ຫລັງ 2 ມາຮອດປະຈຸບັນນີ້ ຄູ່ຮ່ວມມືທັງສອງຝ່າຍລາວ-ຈີນ ໄດ້ຮ່ວມມືກັນດ້ວຍດີມາຕະຫຼອດ ຜະລິດຕະພັນຂອງ ບຊລ ແມ່ນມີຄຸນນະພາບດີ ພ້ອມນັ້ນ, ບໍລິສັດກໍ່ໄດ້ເອົາໃຈໃສ່ວຽກງານປົກປັກຮັກສາສິ່ງແວດລ້ອມ, ປະຕິບັດພັນທະຕໍ່ລັດ ແລະ ຊ່ວຍເຫຼືອສັງຄົມຢ່າງຕັ້ງໜ້າ. ຜະລິດຕະພັນກາກະທິງທອງໄດ້ຮັບຄ່ານິຍົມສູງ ຢູ່ໃນທ້ອງຕະຫຼາດ, ບໍລິສັດຊີມັງລາວ ເປັນບໍລິສັດທຳອິດ

ທີ່ອີງການສາກົນ ຮັບຮອງມາດຕະຖານສາກົນ ISO 9001 : 2015. ຊີມັງກາກະທິງທອງໄດ້ນຳໃຊ້ເຂົ້າໃນ ການກໍ່ສ້າງຕຶກອາຄານ ຫ້ອງວ່າການນາຍົກລັດຖະມົນຕີ, ຫໍປະຊຸມແຫ່ງຊາດ, ສະໜາມກິລາແຫ່ງຊາດ, ຖະໜົນລ້ານຊ້າງ, ໂຮງແຮມດອນຈັນ, ຂົວຫີນເຫີບ, ເຂື່ອນໄຟຟ້າ ແລະ ໂຄງການຂະໜາດໃຫ່ຍອື່ນໆ. ນອກນັ້ນ ພວກເຮົາຍັງໄດ້ຖືກເລືອກເປັນຜູ້ສະໜອງຫຼັກ ໃນໂຄງການກໍ່ສ້າງເສັ້ນທາງລົດໄຟລາວຈີນ ແລະ ໂຄງການກໍ່ສ້າງເສັ້ນທາງດ່ວນວຽງຈັນ-ວັງວຽງ ຢູ່ໃນ ສປປລາວ. ກ່ອນປີ 2019 ບໍລິສັດ ຊີມັງລາວ ໄດ້ດຳເນີນກິດຈະການໂດຍມີກຳໄລຢ່າງຕໍ່ເນື່ອງ ສະພາບເສດຖະກິດດີ ແລະ ມີສີ່ສຽງທາງດ້ານສັງຄົມ. ບໍລິສັດ ໄດ້ປະຕິບັດພັນທະຕໍ່ສັງຄົມຢ່າງຕັ້ງໜ້າເຊັ່ນ : ເສຍອາກອນ, ເພີ່ມໂອກາດໃນການສ້າງວຽກເຮັດງານທຳແກ່ ປະຊາຊົນໃນທ້ອງຖິ່ນ, ຊ່ວຍເຫຼືອອົງການຈັດຕັ້ງ ແລະ ອຳນາດການປົກຄອງ, ຮັກສາສາຍສຳພັນທີ່ດີກັບ ກອງທັບ, ຊ່ວຍເຫຼືອບັນດາໂຮງຮຽນ, ໂຮງໝໍ, ສ້ອມແປງຂົວທາງ ແລະ ອື່ນໆ. ຫຼາຍປີຜ່ານມາບໍລິສັດໄດ້ ຮັບການຍ້ອງຍໍຈາກລັດຖະບານ ລາວ-ຈີນ ແລະ ໄດ້ເປັນທຸລະກິດຕົວແບບ ໃນການຮ່ວມມືທາງດ້ານ ເສດຖະກິດ-ເຕັກນິກ ລາວ-ຈີນ.

ໃນປີ 2014 ບໍລິສັດໄດ້ສຳເລັດ ການສິ່ງເງິນກູ້ຢືມເພື່ອກໍ່ສ້າງໂຮງງານ ລວມທັງຕົ້ນທຶນ ແລະ ດອກເບ້ຍ ໃຫ້ແກ່ທະນາຄານ ແຫ່ງ ສ.ປ.ປ.ລາວ ຕາມເວລາທີ່ກຳນົດໄວ້.

ນັບແຕ່ປີ 2003-2019 ສາມາດຜະລິດ ແລະ ຈຳໜ່າຍຊີມັງທັງໝົດ ຈຳນວນ 4,008,800 ໂຕນ, ສ້າງ ລາຍຮັບຈາກການຈຳໜ່າຍຊີມັງໄດ້ທັງໝົດຈຳນວນ 2.346 ຕື້ກີບ ສ້າງກຳໄລເປັນຈຳນວນ 101 ຕື້ກີບ, ເສຍອາກອນທັງໝົດຈຳນວນ 194 ຕື້ກີບ ແລະ ຊ່ວຍເຫຼືອສັງຄົມ 2,62 ຕື້ກີບ .

4. **ສິດສຳປະທານສຳຫຼວດ ແລະ ຂຸດຄົ້ນອັດຖຸດິບ:** ຜ່ານມາ ບຊລ ໄດ້ຮັບສິດສຳປະທານສຳຫຼວດແລະ ຂຸດ ຄົ້ນອັດຖຸດິບ ດັ່ງນີ້:
   - ສຳປະທານຂຸດຄົ້ນຫີນປູນຜາບ໋ວ ບ້ານ ນາຄູນ ເມືອງວັງວຽງ 51 ເຮັກຕາ.
   - ສຳປະທານຂຸດຄົ້ນດິນໜຽວແດງ ບ້ານ ນາທອງ ເມືອງວັງວຽງ 3 ເຮັກຕາ.
   - ສຳປະທານຂຸດຄົ້ນດິນຊາຍພູ ບ້ານ ນ້ຳປາດເໜືອ ເມືອງວັງວຽງ 5 ເຮັກຕາ.
   - ສຳປະທານ ສຳຫຼວດຖ່ານຫີນ ບ້ານຄອນພຸກ ເມືອງຫີນເຫີບ ແຂວງວຽງຈັນ 20 ກິໂລຕາແມັດ.
5. **ຕົວເລກເສດຖະກິດ ຂອງບໍລິສັດໃນທ້າຍປີ 2020:**

   ສະພາບຊັບສິນ ແລະ ໜີ້ສິນ : ຮອດວັນທີ 31 / 12 / 2020 ບໍລິສັດມີຊັບສິນທັງໝົດເປັນຈຳນວນ 82,05 ຕື້ກີບໃນນັ້ນຊັບສິນທີ່ບໍ່ໝຸນວຽນມີຈຳນວນ 23,13 ຕື້ກີບ, ໜີ້ຕ້ອງຮັບມີຈຳນວນ 29,73 ຕື້ກີບ, ເຄື່ອງໃນສາງຈຳນວນ 25,59 ຕື້ກີບ, ຊັບສິນອື່ນໆທີ່ໝຸນວຽນຈຳນວນ 58,93 ຕື້ກີບ, ໜີ້ຕ້ອງສົ່ງທັງໝົດ 37,82 ຕື້ກີບ ທຶນເຈົ້າຂອງທຸລະກິດຈຳນວນ 44,23 ຕື້ກີບ.

   ສຳລັບສະພາບຊັບສິນ ແລະ ໜີ້ສິນ ຮອດວັນທີ 30 / 06 / 2021 ບໍລິສັດມີຊັບສິນທັງໝົດເປັນຈຳ ນວນ 59,18 ຕື້ກີບໃນນັ້ນຊັບສິນທີ່ບໍ່ໝຸນວຽນມີຈຳນວນ 19,61 ຕື້ກີບ, ໜີ້ຕ້ອງຮັບມີຈຳນວນ 17,17 ຕື້ ກີບ, ຊັບສິນໝຸນວຽນຈຳນວນ 39,56 ຕື້ກີບ, ໜີ້ຕ້ອງສົ່ງທັງໝົດ 39,45 ຕື້ກີບ ທຶນເຈົ້າຂອງທຸລະ ກິດຈຳນວນ 19,72 ຕື້ກີບ. (ເອກະສານຊ້ອນທ້າຍ01).

III. ຂໍ້ຫຍຸ້ງຍາກ ແລະ ບັນຫາທີ່ປະເຊີນ:

ໃນປີ 2019 ຍ້ອນການແຂ່ງຂັນຫຼຸດລາຄາ ຂອງບາງບໍລິສັດຜະລິດຊີມັງ ລາຄາຊີມັງໃນທ້ອງ ຕະຫຼາດ ສ່ວນຫຼາຍຈະຕ່ຳກວ່າຕົ້ນທຶນການຜະລິດ ສະນັ້ນ, ບໍລິສັດໄດ້ຂາດທຶນ ຈຳນວນ 22,48 ຕື້ກີບ, ປີ 2020 ເນື່ອງຈາກການລະບາດຂອງພະຍາດໂຄວິດ-19 ນັບແຕ່ເດືອນ 4/2020 ມາຮອດປະຈຸບັນ

ໂຮງງານໄດ້ຢຸດການຜະລິດ ຍິ່ງເຮັດໃຫ້ບໍລິສັດພົບກັບບັນຫາຂາດທຶນໝຸນວຽນຢ່າງໜັກໜ່ວງ.

ສາເຫດທີ່ພາໃຫ້ບໍລິສັດ ຊີມັງລາວ ຢຸດການຜະລິດແມ່ນ ການດຳເນີນທຸລະກິດຂາດທຶນ ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ບວກກັບມີຜົນກະທົບຈາກການແຜ່ລະບາດ ຂອງພະຍາດໂຄວິດ-19, ລາຍລະອຽດມີດັ່ງລຸ່ມນີ້ :

1. ເນື່ອງຈາກວ່າມີຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ອີງຕາມຄຳສັ່ງເລກທີ 06/ສນຍ, ລົງວັນທີ 29/3/2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ ແລະ ປ້ອງກັນການລະບາດເພື່ອຕ້ານພະຍາດໂຄວິດ-19 ນັບແຕ່ວັນທີ 1/4/2020 ເປັນຕົ້ນມາຮອດປະຈຸບັນນີ້ ບໍລິສັດ ຊີມັງລາວ ໄດ້ຢຸດການຜະລິດຕະຫຼອດ, ບັນດາໂຄງການກໍ່ສ້າງຕ່າງໆທີ່ລົງທຶນຢູ່ໃນ ສປປລາວ ຫຼຸດລົງຢ່າງຫຼວງຫຼາຍ, ເດືອນ 4-7/2020 ທຽບໃສ່ປີກ່ອນ ປະລິມານການຈຳ ໜ່າຍຊີມັງຫຼຸດລົງ ປະມານ 60,000 ໂຕນ, ລາຍຮັບຈາກການຈຳໜ່າຍຊີມັງຫຼຸດລົງປະມານ 3,220,000 ໂດລາ ເຮັດໃຫ້ 6 ເດືອນຕົ້ນປີ 2020 ສືບຕໍ່ຂາດທຶນ. ສະນັ້ນ, ໃນກອງປະຊຸມສະພາບໍລິຫານຂອງ ບຊລ ຄັ້ງວັນທີ 23/06/2020 ໄດ້ມີມະຕິ ໃຫ້ ບຊລ ນຳສະເໜີພາກສ່ວນກ່ຽວຂ້ອງຂອງລັດຖະບານ ຍຸດຕິການຜະລິດຊີມັງ, ເພື່ອສ້າງແຜນປັບປຸງ ໃຫ້ ບຊລ ສາມາດສືບຕໍ່ດຳເນີນທຸລະກິດຕໍ່ໄປໄດ້ .
2. ຜະລິດຕະພັນຊີມັງລົ້ນຕະຫຼາດ ບັນດາໂຮງງານແຕ່ລະແຫ່ງ ແຂ່ງຂັນກັນຫຼຸດລາຄາລົງເພື່ອບັນລຸຍອດຂາຍ ເຮັດໃຫ້ລາຄາຊີມັງຫຼຸດລົງຢ່າງຕໍ່ເນື່ອງ, ບັນດາທຸລະກິດຊີມັງຫຼາຍແຫ່ງມີການຂາດທຶນ, ພ້ອມກັນນັ້ນ ຜະລິດຕະພັນຊີມັງໃນທ້ອງຕະຫຼາດແມ່ນຂຶ້ນກັບຜູ້ຊື້ ແລະ ລູກຄ້າໄດ້ແກ່ຍາວການຊຳລະຄ່າຊີມັງ ເຮັດໃຫ້ໜີ້ຕ້ອງຮັບບໍ່ສາມາດເກັບຄືນໄດ້
ທັນເວລາ ເປັນສາເຫດໃຫ້ບໍລິສັດຂາດເງິນທຶນໝຸນວຽນໃນການສືບຕໍ່ການຜະລິດ.
3. ໂຮງງານຊີມັງວັງວຽງຫຼັງ2 (ບຊລ) ມີກຳລັງການຜະລິດ 220,000 ໂຕນຕໍ່ປີ, ຜ່ານການນຳໃຊ້ມາເປັນໄລຍະເວລາ 20 ປີ, ເຮັດໃຫ້ເຕັກນິກ ແລະ ເຄື່ອງກົນຈັກຕ່າງໆເກົ່າແກ່ຫຼ້າຫລັງ, ຄວາມສາມາດໃນການຜະລິດໜ້ອຍ ແຕ່ຄ່າສິ້ນເປືອງສູງ, ຈຳນວນພະນັກງານຫຼາຍ, ຕົ້ນທຶນບາລຸງຮັກສາການສ້ອມແປງໃນແຕ່ລະປີໄດ້ເພີ່ມຂຶ້ນ, ແຫຼ່ງວັດຖຸດິບຕົ້ນຕໍຢູ່ຫ່າງໄກຈາກໂຮງງານ, ພາໃຫ້ຕົ້ນທຶນການຜະລິດສູງ ແລະ ພົບຄວາມຫຍຸ້ງຍາກໃນການດຳເນີນທຸລະກິດ.
4. ໂຮງງານມີທີ່ຕັ້ງຢູ່ເມືອງວັງວຽງ ທີ່ເປັນເມືອງທ່ອງທ່ຽວ, ຊຶ່ງອາດສົ່ງຜົນສະທ້ອນທາງລົບແກ່ບັນຍາກາດການທ່ອງທ່ຽວ, ຜ່ານມາຂັ້ນເທິງກໍເຄີຍໃຫ້ທິດຊີ້ນຳ ກ່ຽວກັບບັນຫາສະພາບແວດລ້ອມນີ້ແລ້ວ.

IV. ທ່າແຮງ ແລະ ຊັບພະຍາກອນທີ່ມີຢູ່ໃນປະຈຸບັນ:

ເຖິງແມ່ນວ່າປະຈຸບັນນີ້ ບໍລິສັດໄດ້ປະເຊີນຄວາມຫຍຸ້ງຍາກ ແຕ່ເມື່ອເບິ່ງລວມແລ້ວ ເຫັນວ່າ ບຊລ ຍັງມີທ່າແຮງດ້ານຊັບພະຍາກອນຈຳນວນໜຶ່ງ ທີ່ສາມາດຂຸດຄົ້ນ ແລະ ມີເງື່ອນໄຂສາມາດກຳນົດທິດທາງປັບປຸງໃນອະນາຄົດ ດັ່ງນີ້:

1. ບຊລ ມີຖານະເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ສາມາດຂະຫຍາຍການພັດທະນາ ໂດຍຜ່ານຕະຫຼາດຫຼັກຊັບ ແລະ ຊ່ວຍບໍລິສັດດຳເນີນກິດຈະການແບບຍືນຍົງຢູ່ໃນສ.ປ.ປ.ລາວ ໄດ້ ໃນອະນາຄົດ.
2. ບຊລ ໄດ້ສຳເລັດການສົ່ງຄືນຕົ້ນທຶນ ແລະ ດອກເບ້ຍເງິນກູ້ຢືມ ເພື່ອກໍ່ສ້າງໂຮງງານ ໝົດແລ້ວໃນປີ 2014.
3. ບຊລ ມີເຂດສຳປະທານຂຸດຄົ້ນວັດຖຸດິບ (ຫີນປູນ, ດິນໜຽວຂາວ, ໜຽວແດງ ແລະ ຊາຍພູ) ຊຶ່ງມີປະລິມານສະສົມຫຼາຍພໍສົມຄວນ, ນອກນັ້ນ, ຍັງມີເຂດສຳປະທານສຳຫຼວດບໍ່ຖ່ານຫີນບ້ານຄອນພຸກ ເມືອງຫີນເຫີບ ແຂວງວຽງຈັນ. ຜ່ານການຊີ້ເຈາະສຳຫຼວດແລ້ວ ເຫັນວ່າມີຄວາມເປັນໄປໄດ້ທາງເສດຖະກິດສູງ ກຳລັງນຳສະເໜີບົດລາຍງານການສຳຫຼວດ ຕໍ່ລັດຖະບານລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະ

ເມີນຈຳນວນປະລິມານສະສົມ ແລະ ກວດກາປິດລາຍງານດັ່ງກ່າວ, ຄາດວ່າຈະສາມາດເຊັນສັນຍາລົງທຶນ ຂຸດຄົ້ນໄດ້ໃນອະນາຄົດອັນໃກ້ນີ້.

4. ບຊລ ເປັນເຈົ້າຂອງຊີມັງຍີ່ຫໍ້ກາກະທົງທອງ ຊຶ່ງເປັນຍີ່ຫໍ້ລະດັບທີ່ໜຶ່ງທີ່ມີຊື່ສຽງ ແລະ ຄ່ານິຍົມສູງ ຜ່ານມາ ຢູ່ໃນທ້ອງຕະຫຼາດ ສປປລາວ.
5. ດ້ານທີ່ຕັ້ງພູມສາດ : ໂຮງງານຊີມັງວັງວຽງ ຫຼັງ 2 ຕິດກັບເສັ້ນທາງເລກທີ 13 ເໜືອ ແລະ ໃກ້ກັບເຂດທ່ອງ ທ່ຽວວັງວຽງ ທີ່ມີຊື່ສຽງໂດ່ງດັ່ງ, ເນື້ອທີ່ໂຮງງານກວ້າງຂວາງ, ເນື້ອທີ່ດິນສາມາດທີ່ນຳໃຊ້ໄດ້ມີ 58 ເຮັກຕາ, ມີທິວທັດສວຍງາມ, ມີຕົ້ນໄມ້ສີຂຽວ, ຮົ່ມເຢັນ, ຢູ່ທາງດ້ານໜ້າມີຫ້ວຍ-ໜອງ , ທາງເບື້ອງຫຼັງມີພູຜາ ແລະ ເປັນໂຮງງານທີ່ມີສະພາບແວດລ້ອມທີ່ດີ, ຫຼັງຈາກການກໍ່ສ້າງທາງລົດໄຟລາວ-ຈີນ ສຳເລັດແລ້ວໃນປີ 2021 ເຂດວັງວຽງ ຈະເປັນຈຸດສູນກາງຂອງເສັ້ນທາງລົດໄຟ ແລະ ເສັ້ນທາງດ່ວນ ໃນຕໍ່ໜ້າຈະກາຍເປັນ ສູນທ່ອງທ່ຽວ, ການຂົນສົ່ງຢູ່ໃນສປປລາວ ສະດວກສະບາຍ ວ່ອງໄວຂຶ້ນ, ທ່າແຮງທີ່ຕັ້ງຂອງໂຮງງານຊີມັງ ວັງວຽງຫລັງ2 ໃນຕໍ່ໜ້າ ຈະເໝາະສົມພັດທະນາເປັນຂະແໜງ
ທ່ອງທ່ຽວວັດທະນາທຳ ທີ່ມີເອກະລັກພິເສດ ບໍ່ຄືກັບບ່ອນອື່ນໆ.

V. ແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງ ບຊລ:

ຜ່ານການຄົ້ນຄວ້າ ປຶກສາຫາລື ສຶກສາຄວາມເປັນໄປໄດ້ ຂອງຄະນະຮັບຜິດຊອບຊີ້ນຳ ແລະ ອະນຸກຳມະການ ສ້າງແຜນປັບປຸງ ຟື້ນຟູທຸລະກິດ ຂອງ ບຊລ ໄດ້ກຳນົດທາງເລືອກ ທີ່ສາມາດເປັນໄປໄດ້ ຊຶ່ງມີລາຍລະອຽດລຸ່ມນີ້ :

1. **ໄລຍະສັ້ນ** : ຄະນະອຳນວຍການ ບຊລ ຕ້ອງພະຍາຍາມເກັບກູ້ ໜີ້ຕ້ອງຮັບ ແລະ ສະສາງໜີ້ຕ້ອງສົ່ງໃຫ້ສຳ ເລັດໂດຍໄວ, ຈັດສັນພະນັກງານຕາມຄວາມເໝາະສົມ, ຫຼຸດຜ່ອນພາລະຂອງບໍລິສັດ ທີ່ມີຢູ່ໃນປະຈຸບັນ.

   - **ການຈັດສັນພະນັກງານ:**

ພະນັກງານຂອງ ບຊລ ທັງໝົດຈຳນວນ 276 ຄົນ, ມີພະນັກງານໄດ້ຂຽນໃບສະເໜີລາອອກ ດ້ວຍຄວາມສະ ໝັກໃຈ ແລະ ພັກຜ່ອນ ນັບແຕ່ວັນທີ 01/08/2020 ເປັນຕົ້ນມາ ຈຳນວນ 269 ຄົນ, ຍັງເຫຼືອ ພະນັກງານລາວ ຈຳ ນວນ 03 ຄົນ ແລະ ພະນັກງານຈີນ 04 ຄົນທີ່ຍັງບໍ່ຂຽນໃບລາອອກ. ເນື່ອງຈາກໃນໄລຍະນີ້ ບຊລ ມີຄວາມຈຳເປັນ ຕ້ອງໄດ້ຈັດສັນເອົາພະນັກງານ ທີ່ຂຽນໃບລາອອກແລ້ວ ໃນນາມເປັນພະນັກງານສັນຍາຈ້າງ ເພື່ອຮອງຮັບກັບວຽກ ງານ ທວງໜີ້ ແລະ ປົກປັກຮັກສາໂຮງງານ ຈຳນວນທັງໝົດ 18 ທ່ານ ໃນນັ້ນ ເປັນຄົນຈີນ 6 ທ່ານ. ພະນັກງານ ດັ່ງກ່າວໄດ້ຮັບ ເງິນເດືອນຕາມຈຳນວນທີ່ເຄີຍໄດ້ຮັບຜ່ານມາ ແຕ່ເງິນນະໂຍບາຍອື່ນໆນັ້ນ ບຊລ ຈຳເປັນຕ້ອງໄດ້ ຫຼຸດຜ່ອນລົງຕາມຄວາມເໝາະສົມຕົວຈິງ ແລະ ໃນໄລຍະເຮັດວຽກເປັນສັນຍາຈ້າງນີ້ຈະບໍ່ໄດ້ຄິດໄລ່ເງິນອຸດໜູນ ອອກການເພີ້ມອີກ.

   - **ການເກັບກູ້ໜີ້ຕ້ອງຮັບ:**

ພາຍຫລັງບໍລິສັດໄດ້ຢຸດຕິການຜະລິດ ວຽກງານຕົ້ນຕໍກໍ່ແມ່ນວຽກການເກັບໜີ້ສິນໃຫ້ໄດ້ທັນເວລາ ເພື່ອນຳໃຊ້ເງິນ ດັ່ງກ່າວ ມາແກ້ໄຂຈ່າຍເງິນອຸດໜູນອອກການຂອງພະນັກງານ, ສົ່ງເງິນກູ້ໃຫ້ທະນາຄານ, ແກ້ໄຂບັນຫາໜີ້ສິນຕ່າງໆ ທີ່ມີຢູ່ ເພື່ອຫຼີກລຽງ ບໍ່ໃຫ້ເກີດຄວາມສ່ຽງໃນການຮ້ອງຟ້ອງ ຂອງພະນັກງານ ຫຼື ບັນດາເຈົ້າໜີ້ຕ່າງໆ.

ຄະນະອຳນວຍການ ບຊລ ຕ້ອງເປັນເຈົ້າການຊີ້ນຳຢ່າງໃກ້ສິດ ໃນການທວງທາວ ແລະ ເກັບກູ້ໜີ້ສິນ ທີ່ມີຍອດໜີ້ ຕ້ອງຮັບ ໃນທ້າຍປີ 2020 ຈຳນວນ 29,73 ຕື້ກີບ ໃຫ້ສາມາດເກັບກູ້ໃຫ້ສຳເລັດກ່ອນການດຳເນີນການມອບໂອນ

ຮຸ້ນ ກັບຜູ້ລົງທຶນໃໝ່. ໃນກໍລະນີຫາກການທວງໜີ້ ບໍ່ສາມາດສຳເລັດຕາມທີ່ກ່າວມາເທິງນັ້ນ ບຊລ ຕ້ອງເຈລະຈາ ໃຫ້ຜູ້ລົງທຶນໃໝ່ຮັບຜິດຊອບໃນການເກັບກູ້ຕໍ່ ພາຍຫຼັງມອບໂອນຮຸ້ນແລ້ວ ແຕ່ທັງນັ້ນ ທັງນີ້ ບຊລ ຕ້ອງມີໃບຢັ້ງຢືນ ຮັບຮູ້ໜີ້ສິນຈາກລູກຄ້າແຕ່ລະລາຍ ໃຫ້ແກ່ຜູ້ລົງທຶນໃໝ່ ເພື່ອເປັນຂໍ້ມູນໃນອະນາຄົດ.

- **ການສະສາງໜີ້ຕ້ອງສົ່ງ:**

ຄະນະອຳນວຍການ ບຊລ ຕ້ອງຈັດລຳດັບການສະສາງໜີ້ຕ້ອງສົ່ງ ຕາມສະພາບຄວາມເປັນຈິງ ທີ່ສາມາດເກັບໜີ້ ມາໄດ້ ໃນນັ້ນ, ຕ້ອງໄດ້ຈ່າຍຕົ້ນທຶນເງິນກູ້ຂອງທະນາຄານ ລາວ-ຈີນຕາມກຳນົດເວລາ, ໜີ້ສິນຄ່າອັດຖຸດິບ, ພັນທະ ຕໍ່ລັດ ແລະອື່ນໆ, ສ່ວນເງິນອຸດໜູນອອກການຂອງພະນັກງານນັ້ນ ເນື່ອງຈາກເປັນເງິນຈຳນວນຫຼາຍ ສະນັ້ນ, ບຊລ ຈະຕ້ອງຈັດສັນຈ່າຍເປັນງວດ ໃນອັດຕາສ່ວນເປັນເປີເຊັນ ໃຫ້ແຕ່ລະຄົນຢ່າງທົ່ວເຖິງ ຕາມຄວາມສາມາດຂອງ ບຊລ . ຕາມຕົວເລກບັນຊີທ້າຍປີ 2020 ບໍລິສັດມີໜີ້ຕ້ອງສົ່ງ ຈຳນວນ 37,82 ຕື້ກີບ ພ້ອມນັ້ນ, ບຊລ ຍັງຕ້ອງ ຈ່າຍເງິນອຸດໜູນອອກການທີ່ຍັງຄ້າງຈ່າຍໃຫ້ແກ່ພະນັກງານທັງໝົດຈຳນວນ 9,22 ຕື້ກີບ . ທັງໝົດນັ້ນ ຕ້ອງສະສາງ ໃຫ້ສຳເລັດກ່ອນການດຳເນີນການມອບໂອນຮຸ້ນ ກັບຜູ້ລົງທຶນໃໝ່. ໃນກໍລະນີຫາກການທວງໜີ້ ບໍ່ສາມາດສຳເລັດ ຕາມທີ່ກ່າວມາເທິງນັ້ນ ບຊລ ຕ້ອງເຈລະຈາ ໃຫ້ຜູ້ລົງທຶນໃໝ່ ເພື່ອຮັບຜິດຊອບໃນການສະສາງຕໍ່ ພາຍຫຼັງມອບໂອນ ຮຸ້ນແລ້ວ.

- **ການແກ້ໄຂຂໍ້ຂັດແຍ່ງດ້ານແຮງງານ:**

ໃນໄລຍະກ່ອນວັນທີ 31/07/2020 ບຊລ ມີພະນັກງານທັງໝົດ 276 ຄົນ, ເປັນພະນັກງານຖາວອນລາວ ຈຳ ນວນ 263 ຄົນ, ພະນັກງານຖາວອນຈີນ 06 ຄົນ, ພະນັກງານສັນຍາຈ້າງຈີນ 04 ຄົນ. ໃນຈຳນວນດັ່ງກ່າວ ມີ ພະນັກງານລາວຈຳນວນ 03 ຄົນ ແລະ ພະນັກງານສັນຍາຈ້າງຈີນ 04 ຄົນ ບໍ່ໄດ້ຂຽນໃບລາອອກ, ສ່ວນພະນັກງານ ທີ່ເຫຼືອໄດ້ຂຽນໃບສະເໜີລາອອກຈາກການຈັດຕັ້ງ ໂດຍເຫັນດີຮັບເອົາເງິນອຸດໜູນ ຕາມການຄິດໄລ່ເງິນອຸດ ໜູນອອກການ ໂດຍຮູບແບບເອົາເງິນເດືອນພື້ນຖານນຶ່ງເດືອນຄູນໃຫ້ຈຳນວນປີການ ທີ່ເຮັດວຽກໃນບໍລິສັດ ແລະ ກໍ ໄດ້ເບີກຈ່າຍຄັ້ງທີ 1 ໄປແລ້ວຈຳນວນ 20% ຂອງຍອດເງິນບຳເນັດອອກການຂອງແຕ່ລະຄົນ ແລະ ບໍລິສັດຈະສືບຕໍ່ ການເບີກຈ່າຍໃຫ້ພະນັກງານຕື່ມໃນເວລາເກັບໜີ້ໄດ້ຈາກໂຄງການໃຫຍ່ໄດ້ໃນແຕ່ລະງວດ. ປະຈຸບັນນີ້ຕາມຂໍ້ມູນ ການຄິດໄລ່ເງິນອຸດໜູນອອກການ ລວມທັງພະນັກງານ 07 ຄົນທີ່ບໍ່ທັນຂຽນໃບລາອອກ ເປັນເງິນທັງໝົດ 12,08 ຕື້ ກີບ ແລະ ໄດ້ຈ່າຍໄປແລ້ວ 2,20 ຕື້ກີບ ຍັງຄ້າງຈ່າຍ 9,88 ຕື້ກີບ (ໃນນີ້ ສະເພາະເງິນອຸດໜູນອອກການຂອງ ພະນັກງານ 07 ຄົນທີ່ບໍ່ໄດ້ຂຽນໃບລາອອກ ໄດ້ຄິດໄລ່ໃນຫຼັກການດຽວກັນກັບພະນັກງານທີ່ຂຽນໃບລາອອກການ ແລ້ວ).

ຮອດປະຈຸບັນນີ້ ແຜນການແກ້ໄຂບັນຫາ ຂໍ້ຂັດແຍ່ງດ້ານແຮງງານມີດັ່ງນີ້:

1. ເງິນອຸດໜູນອອກການຂອງພະນັກງານທີ່ຄ້າງຈ່າຍ: ບໍລິສັດຕ້ອງເອົາໃຈໃສ່ເກັບກູ້ໜີ້ສິນຄ່າຊີມັງນຳບັນດາ ໂຄງການໃຫຍ່ໂດຍໄວ ເພື່ອໃຫ້ໄດ້ຈ່າຍເງິນອຸດໜູນອອກການຂອງພະນັກງານທີ່ຍັງຄ້າງຈ່າຍ 80 % ໃຫ້ສຳ ເລັດ ຊ້າສຸດພາຍໃນທ້າຍປີ 2022ນີ້ ແລະ ໄດ້ສ້າງແຜນການຈ່າຍເງິນອຸດໜູນອອກການຂອງພະນັກງານ ບຊລ ຕິດຄັດມາພ້ອມນີ້ (ເອກະສານຊ້ອນທ້າຍເລກທີ 03).
2. ເພື່ອຫຼີກລ່ຽງການຟ້ອງຮ້ອງ ຈາກພະນັກງານ ບໍລິສັດຕ້ອງເຈລະຈາກັບຜູ້ລົງທຶນໃໝ່ ຂໍໃຫ້ເຂົາເຈົ້າຮັບຜິດຊອບ ຈ່າຍເງິນອຸດໜູນໃຫ້ພະນັກງານທັງໝົດ ໃນໄລຍະດຳເນີນການຊື້ຂາຍ ແລະ ໂອນຮຸ້ນ.

3. ພະນັກງານລາວຈຳນວນ 03 ຄົນ ທີ່ບໍ່ຂຽນໃບລາອອກການ: ສະເໜີໃຫ້ພະນັກງານດັ່ງກ່າວ ຂຽນໃບລາອອກ ແລະ ຍອມຮັບໃນການປະຕິບັດນະໂຍບາຍ ຄືກັບພະນັກງານທີ່ລາອອກກ່ອນໜ້າແລ້ວ.
4. ພະນັກງານສັນຍາຈ້າງຈີນ ຈຳນວນ 04 ຄົນ ບໍ່ໄດ້ຮັບເງິນອຸດໜູນອອກການ: ໃຫ້ປະຕິບັດນະໂຍບາຍ ຄືກັບ ພະນັກງານຖາວອນລາວ ແລະ ຈີນ ທີ່ເຄີຍປະຕິບັດຜ່ານມາ.

➢ **ທາບທາມ ຊອກເປົ້າໝາຍຜູ້ຈະມາຮ່ວມທຶນ:**

ບຊລ ຕ້ອງໄດ້ສຶກສາ ແລະ ທາບທາມຫາຜູ້ຮ່ວມທຶນໃໝ່ ເພື່ອເປົ້າໝາຍການ ພັດທະນາ ແລະ ຟື້ນຟູ ບຊລ ໃນ ອະນາຄົດ. ໃນນີ້ ບຊລ ໄດ້ປະສານສົມທົບກັບບັນດາຂາຮຸ້ນໃຫຍ່ ເປັນຕົ້ນ CYC, ລັດວິສາຫະກິດ ພ.ກ.ອ, ບໍລິສັດຫຼັກຊັບລາວ-ຈີນ ແລະ ພາກສ່ວນອື່ນໆ ເພື່ອຊ່ວຍທາບທາມ ແລະ ຊອກຫາຜູ້ຮ່ວມທຶນທີ່ມີຄວາມສົນໃຈ ເປັນຜູ້ພັດທະນາ ບຊລ ໃນຮູບແບບຕ່າງໆຕາມເຈດຈຳນົງຂອງເຂົາເຈົ້າ. ໄລຍະຜ່ານມາ ຕາມການທາບທາມແລ້ວ ເຫັນວ່າບໍ່ສາມາດຊອກໄດ້ ຜູ້ສົນໃຈລົງທຶນເພື່ອສືບຕໍ່ໃນຂະແໜງທຸລະກິດ ຜະລິດ ແລະ ຈຳໜ່າຍຊີມັງ.

❖ ສາຍເຫດທີ່ຜູ້ລົງທຶນໃໝ່ບໍ່ມີຄວາມສົນໃຈ ໃນການສືບຕໍ່ກິດຈະການຊີມັງຂອງ ບຊລ:

- ສະພາບການອີ່ມຕົວຂອງຕະຫຼາດຊີມັງພາຍໃນປະເທດ ຫຼາຍໂຮງງານຊີມັງເກີດຂຶ້ນໃໝ່ ເຮັດໃຫ້ມີການ ແຂ່ງຂັນສູງ. ທຸກໆໂຮງງານທີ່ດຳເນີນການຜະລິດຢູ່ ໃນປະຈຸບັນກໍບໍ່ສາມາດຜະລິດໄດ້ເຕັມກຳລັງ.
- ໂຮງງານຊີມັງວັງວຽງຫຼັງສອງ ໄດ້ອອກແບບມີຂະໜາດກຳລັງການຜະລິດນ້ອຍ (ທຽບໃສ່ໂຮງງານທີ່ ສ້າງຂຶ້ນໃໝ່ໃນປະຈຸບັນ), ເຕັກໂນໂລຊີພື້ນສະໄໝ, ເກົ່າແກ່, ຖ້າຈະປັບປຸງເຄື່ອງຈັກໃໝ່ ຈະຕ້ອງໄດ້ ໃຊ້ທຶນຈຳນວນຫຼາຍ.
- ຕັ້ງຢູ່ເມືອງທ່ອງທ່ຽວ ມີຄວາມສ່ຽງທີ່ພາກລັດຈະໃຫ້ຢຸດຕິສັນຍາລົງທຶນ ໃນກໍລະນີໝົດອາຍຸສັນຍາ.

2. **ໄລຍະກາງ ແລະໄລຍະຍາວ:** ຊອກຫາ, ສຶກສາ ແລະ ເລືອກເຟັ້ນຜູ້ລົງທຶນ ຫຼື ຄູ່ຮ່ວມມືມາຈັດຊື້ຮຸ້ນ ເພື່ອດຳເນີນການປະກອບຮຸ້ນ :

ໃນກອງປະຊຸມຄະນະຮັບຜິດຊອບຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກ ເພື່ອສ້າງແຜນປັບປຸງ ແລະ ຟື້ນຟູທຸລະ ກິດ ຂອງບໍລິສັດຊີມັງລາວ ຄັ້ງວັນທີ 07/04/2021, ໄດ້ຕົກລົງເຫັນດີ ເລືອກເອົາທາງເລືອກທີ່ມີຄວາມອາດສາມາດ ເປັນໄປໄດ້ສູງທີ່ສຸດ ຄື ໃຫ້ຄວາມຮ່ວມມືກັບຜູ້ລົງທຶນໃໝ່ ໂດຍພື້ນຖານການປ່ຽນຈາກ ຂະແໜງທຸລະກິດຜະລິດ ຊີມັງ ເປັນ ຂະແໜງທຸລະກິດພັດທະນາການທ່ອງທ່ຽວວັດທະນະທຳ, ຊຶ່ງຈະນຳໃຊ້ ເນື້ອທີ່ທັງໝົດຂອງໂຮງງານ ແລະ ຮັກສາເນື້ອທີ່,ບໍ່ວັດຖຸດິບ, ສິ່ງປຸກສ້າງ, ສິ່ງສາທານຸປະໂພກ ແລະ ຍີ່ຫໍ້ຂອງຊີມັງລາວໄວ້ເໝືອນເດີມ. ຊຶ່ງໃນ ທາງເລືອກນີ້ ໄດ້ມີບໍລິສັດເຄືອຂ່າຍເຕັກໂນໂລຊີຢຸນນານສຽນຫານ ຈຳກັດ ສະເໜີເຈດຈຳນົງໃນການຮ່ວມລົງທຶນ ສືບຕໍ່ພັດທະນາໂຄງການນີ້.

ແຜນຮ່ວມມື ກັບບໍລິສັດ ເຄືອຂ່າຍເຕັກໂນໂລຊີ ຢຸນນານ ສຽນຫານ ຈຳກັດ ເປັນຜູ້ຖືຮຸ້ນລາຍໃຫຍ່ ແລະ ປ່ຽນຈາກຂະແໜງທຸລະກິດຊີມັງ ເປັນ ຂະແໜງການທ່ອງທ່ຽວ-ວັດທະນະທຳ ແບບປະສົມປະສານ:

ປະຈຸບັນນີ້ມີບໍລິສັດ ເຄືອຂ່າຍເທັກໂນໂລຊີ ຢຸນນານ ສຽນຫານ ຈຳກັດ ໄດ້ສະແດງເຈດຈຳນົງ ເປັນລາຍລັກ ອັກສອນ ສະເໜີຈັດຊື້ຮຸ້ນຂອງບໍລິສັດ ຮ່ວມມືສາກົນ ດ້ານເສດຖະກິດ-ເຕັກນິກຢຸນນານ ທັງໝົດ (ເປັນຜູ້ຖືຮຸ້ນ ລາຍໃຫ່ຍອັນດັບທີ່ໜຶ່ງ 35,6964%) ແລະ ບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ (ເປັນຜູ້ຖືຮຸ້ນລາຍໃຫ່ຍອັນດັບທີ່ ສາມ 18,8676%) ທີ່ຖືຄອງຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ໂດຍມີຈຸດປະສົງ ຈະມີແຜນການພັດທະນາ

ຂະແໜງການທ່ອງທ່ຽວ-ວັດທະນາທຳ ແບບປະສົມປະສານ ຢູ່ເຂດວັງວຽງ ແຂວງວຽງຈັນ ໃນຂອບເຂດສະຖານທີ່ ຂອງໂຮງງານຊີມັງວັງວຽງ2 ໂດຍສ້າງເປັນສວນວັດທະນະທຳກະທົ່ງທອງ, ສະໜາມກ໋ອບ, ສວນວັດທະນະທຳລາວ, ສູນສິນລະປະ, ສູນສຸຂະພາບ ແລະ ບໍລິການທ່ອງທ່ຽວອື່ນໆ, ຊຶ່ງລາຍລະອຽດຂອງໂຄງການ ບໍລິສັດຈະໄດ້ສ້າງ ແຜນພັດທະນາກິດຈະການທ່ອງທ່ຽວ ວັດທະນະທຳກະທົ່ງທອງ ສະເໜີຜ່ານກະຊວງແຜນການ ແລະ ການລົງທຶນ ເປັນລາຍລະອຽດຕື່ມ.

ກ. ເປົ້າໝາຍການປະກອບຮຸ້ນຂອງຜູ້ລົງທຶນໃໝ່:

ໃນເບື້ອງຕົ້ນ ຜູ້ລົງທຶນໃໝ່ມີຈຸດປະສົງຊື້ຮຸ້ນ ຂອງ CYC ທັງໝົດ ຈຳນວນ 35,6964% ແລະ ຮຸ້ນຂອງ LCS ທັງໝົດ ຈຳນວນ 18,8676 % ເພື່ອຈະເປັນຜູ້ຖືຮຸ້ນລາຍໃຫຍ່ອັນດັບ 1. ສ່ວນຮຸ້ນຂອງລັດວິສາຫະກິດ ພາອ ຣັກສາໄວ້ຄືເກົ່າ (34,2966%), ສະເພາະຮຸ້ນມວນຊົນທົ່ວໄປ 11,1393%ນັ້ນ ຈະຂຶ້ນກັບຄວາມສະໝັກໃຈຊື້-ຂາຍຕົວຈິງຂອງແຕ່ລະຂາຮຸ້ນ.

ຂ. ຄາດໝາຍແລະຂັ້ນຕອນການປະກອບຮຸ້ນໃໝ່ (ການຊື້ ຂາຍຮຸ້ນ):

ສຳລັບການຊື້ຮຸ້ນຈາກ CYC ແມ່ນສາມາດຊື້ໃນຮູບແບບສັນຍາ ເນື່ອງຈາກວ່າເປັນຮຸ້ນ non-free float ແລະ ຮຸ້ນຂອງບໍລິສັດຫຼັກຊັບລາວ-ຈີນ ແມ່ນສາມາດປະຕິບັດສອງຮູບແບບຄື: ແບບສັນຍາ ແລະ ຜ່ານຕະຫຼາດຫຼັກຊັບ ໃນກໍລະນີໂອນຮຸ້ນຕາມສັນຍາ ບໍລິສັດ ສຽງຫາມ ແມ່ນຈະເຂົ້າເງື່ອນໄຂລະບຽບການຄອບຄອງກິດຈະການ ຈຶ່ງ ຈຳເປັນຕ້ອງສະເໜີຊື້ຮຸ້ນທັງໝົດຈາກຜູ້ຖືຮຸ້ນລາຍຍ່ອຍ ຊຶ່ງຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ ແລະ ຍື່ນສະເໜີມາຍັງສຳນັກງານ ຄຄຊ ພ້ອມນີ້ ການສະເໜີຊື້ຮຸ້ນດັ່ງກ່າວຕ້ອງໄດ້ແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອຊ່ວຍ ດຳເນີນການແທນຕົນ ແລະ ມີເອກະສານປະກອບຄື:

- ຄຳຮ້ອງຂໍສະເໜີຊື້ຮຸ້ນ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.
- ຄຳເຫັນຂອງ ສະພາບໍລິຫານຂອງບໍລິສັດຈົດທະບຽນ ແລະ ທີ່ປຶກສາການເງິນອິດສະລະ ກ່ຽວກັບໜັງສື ສະເໜີຊື້ຮຸ້ນ.
- ໜັງສືສະເໜີຊື້ຮຸ້ນ.

- ການຊື້ຂາຍຮຸ້ນຈະປະຕິບັດຕາມຂັ້ນຕອນດັ່ງນີ້:

1. ຜູ້ລົງທຶນໃໝ່ ເຊັນສັນຍາຊື້ຂາຍຮຸ້ນລາຍໃຫຍ່ ຈາກ CYC ແລະ LCS.
2. ບໍລິສັດຊີມັງລາວ ມະຫາຊົນ ຕ້ອງເປີດເຜີຍຂໍ້ມູນຜ່ານ ຕລຊລ ກ່ຽວກັບການຊື້ຮຸ້ນລາຍໃຫຍ່ຂອງຜູ້ລົງທຶນໃ ໝ່ ຈາກ CYC ແລະ LCS.
3. ຜູ້ລົງທຶນໃໝ່ ສະເໜີຊື້ຮຸ້ນ ຈາກຜູ້ຖືຮຸ້ນລາຍຍ່ອຍ ຕາມລະບຽບຂອງ ສຄຄຊ.
4. ບໍລິສັດຊີມັງລາວ ມະຫາຊົນ ປະກາດແຜນພັດທະນາການທ່ອງທ່ຽວ ວັດທະນະທຳ ໄລຍະ 05 ປີ, ພ້ອມ ທັງ ປະກາດໄລຍະເວລາ, ລາຄາ ແລະ ຈຳນວນຮຸ້ນ ທີ່ຜູ້ລົງທຶນໃໝ່ຈະເກັບຊື້ ຜ່ານຕະຫຼາດຂັ້ນສອງ ຕາມ ການອະນຸມັດຂອງ ສຄຄຊ.

ພາຍຫຼັງ ການສະເໜີຊື້ຮຸ້ນຈາກຜູ້ຖືຮຸ້ນລາຍຍ່ອຍແລ້ວ, ກໍລະນີ ມີຜູ້ຖືຮຸ້ນລາຍຍ່ອຍໜ້ອຍກວ່າ 30 ຄົນ ແລະ ສັດສ່ວນຜູ້ຖືຮຸ້ນລາຍຍ່ອຍຕ່ຳກວ່າ 5%, ຕລຊລ ຈະບໍ່ຖືເອົາເງື່ອນໄຂດັ່ງກ່າວ ເປັນການຖອນ ບໍລິສັດ ບຊລ ອອກ ຈາກ ຕະຫຼາດຫຼັກຊັບລາວ. ແຕ່ເຖິງຢ່າງໃດກໍ່ຕາມ ຕລຊລ ສາມາດ ຮັກສາສະຖານະຂອງບໍລັສັດໃຫ້ເປັນ ບໍລິສັດຈົດ ທະບຽນໄດ້ ໂດຍການໃຫ້ເວລາການຟື້ນຟູກິດຈະການ ຫລື ປ່ຽນແປງທຸລະກິດ ໃນໄລຍະເວລາບໍ່ເກີນ 3 ປີ ຕາມ ບົດຮຽນຂອງຕະຫຼາດຫຼັກຊັບຕ່າງປະເທດ ໃນການແກ້ໄຂບັນຫາດັ່ງກ່າວ.ໃນໄລຍະເວລາການຟື້ນຟູກິດຈະການນັ້ນ ຕລຊລ ຈະໂຈະການຊື້ຂາຍຮຸ້ນຂອງ ບຊລ ແຕ່ຮັກສາສະຖານະເປັນບໍລິສັດຈົດທະບຽນໄວ້. ກໍລະນີ ບຊລ ສາມາດ ແກ້ໄຂບັນຫາດັ່ງກ່າວໄດ້ ຕລຊລ ຈຶ່ງ ອະນຸຍາດໃຫ້ຮຸ້ນຂອງ ບຊລ ສາມາດຊື້ ຂາຍ ໄດ້ຕາມປົກກະຕິ ຕາມລາຄາຊື້ ຂາຍຄັ້ງທຳອິດ ແມ່ນໃຫ້ຍົກເວັ້ນຂອບລາຄາສູງສຸດ-ຕ່ຳສຸດ (ອີງໃສ່ລະບຽບຂອງ ຕລຊລ).

❖ **ເນື້ອໃນຂອງໜັງສືສະເໜີຊື້ຮຸ້ນ**

ໜັງສືສະເໜີຊື້ຮຸ້ນທັງໝົດ ແລະ ບາງສ່ວນ ຕ້ອງປະກອບມີເນື້ອໃນ ດັ່ງນີ້:

- ຈຸດປະສົງ ແລະ ເຫດຜົນ ກ່ຽວກັບການສະເໜີຊື້ຮຸ້ນ;
- ຊື່, ທີ່ຢູ່ ຂອງຜູ້ສະເໜີຊື້ຮຸ້ນ ກໍລະນີ ເປັນນິຕິບຸກຄົນ ຕ້ອງປະກອບມີ ຊື່, ທີ່ຢູ່, ປະເພດທຸລະກິດ, ລາຍຊື່ ຜູ້ມີອຳນາດຄວບຄຸມ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ (End Beneficial Shareholder), ໂຄງຮ່າງ ການຈັດຕັ້ງ ແລະ ມະຕິກອງປະຊຸມຜູ້ຖືຮຸ້ນກ່ຽວກັບການສະເໜີຊື້ຮຸ້ນ;
- ຂໍ້ມູນ ກ່ຽວກັບ ລາຄາຮຸ້ນ, ວິທີການການຈັດສັນຮຸ້ນ (ກໍລະນີ ການສະເໜີຊື້ຮຸ້ນບາງສ່ວນ),ເງື່ອນໄຂການ ຍົກເລີກການສະເໜີຊື້ຮຸ້ນ, ໄລຍະເວລາ ແລະ ສະຖານທີ່ ຮັບຊື້ຮຸ້ນ ແລະ ມື້ສິ້ນສຸດການຮັບຊື້ຮຸ້ນ;
- ຈຳນວນ ແລະ ສັດສ່ວນການຖືຄອງຮຸ້ນ ຂອງຜູ້ສະເໜີຊື້ຮຸ້ນ ໃນບໍລິສັດຈົດທະບຽນ (ຖ້າມີ);
- ຂໍ້ມູນ ກ່ຽວກັບທີ່ປຶກສາທາງດ້ານການເງິນອິດສະລະ ແລະ ບໍລິສັດຫຼັກຊັບທີ່ເປັນຕົວແທນໃນການສະເໜີ ຊື້ຮຸ້ນ;
- ບົດວິເຄາະກ່ຽວກັບຜົນກະທົບຂອງການສະເໜີຊື້ຮຸ້ນຕໍ່ ບໍລິສັດທະບຽນ;
- ຂໍ້ມູນ ກ່ຽວກັບການດຳເນີນທຸລະກິດຂອງຜູ້ສະເໜີຊື້ຮຸ້ນ ແລະ ລາຍລະອຽດລາຍການທີ່ກ່ຽວພັນລະຫວ່າງ ພວກກ່ຽວ ກັບບໍລິສັດຈົດທະບຽນ (ຖ້າມີ);
- ແຜນການໃນໜຶ່ງປີຕໍ່ໜ້າ ກ່ຽວກັບການປັບປຸງ ຫຼື ຟື້ນຟູ ຫຼື ປ່ຽນແປງ ກ່ຽວກັບທຸລະກິດ, ຊັບສິນ, ພະນັກງານ, ການຈັດຕັ້ງ, ກິດລະບຽບຂອງບໍລິສັດ ແລະ ອື່ນໆ ຂອງບໍລິສັດຈົດທະບຽນ;
- ຂໍ້ມູນ ກ່ຽວກັບການຊື້ ຂາຍຮຸ້ນຂອງຜູ້ສະເໜີຊື້ຮຸ້ນ ບໍລິສັດຈົດທະບຽນ ໃນໄລຍະ ເກົ້າສິບວັນ ຜ່ານມາ ນັບແຕ່ວັນຍື່ນເອກະສານປະກອບກ່ຽວກັບການສະເໜີຊື້ຮຸ້ນ ຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ຊັບ. ໂດຍບໍລິສັດທີ່ມີຈຸດປະສົງຈະຊື້ຮຸ້ນ ຕ້ອງຍື່ນໜັງສືສະເໜີເຖິງສຳນັກງານ ຄຄຊ ເພື່ອພິຈາລະນາ ພ້ອມນີ້ ຜູ້ສະເໜີຊື້ຮຸ້ນ ແລະ ບໍລິສັດຈົດທະບຽນ ຕ້ອງເປີດເຜີຍເຫດຜົນ ແລະ ທິດທາງການບໍລິຫານ ທຸລະກິດໃນໜັງສືສະເໜີຊື້ຮຸ້ນ ໂດຍຜ່ານ ຄຳເຫັນ ຂອງສະພາບໍລິຫານ ແລະ ຄຳເຫັນຂອງທີ່ປຶກສາທາງ ດ້ານການເງິນອິດສະລະ.

ປັດຈຸບັນ ສຄຄຊ ແມ່ນຢູ່ໃນຂັ້ນຕອນການຮ່າງຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ ຊຶ່ງອີງຕາມຮ່າງຂໍ້ ຕົກລົງ ດັ່ງກ່າວ ການສະເໜີຊື້ຮຸ້ນ ແມ່ນມີຂັ້ນຕອນ ດັ່ງນີ້:

- ການເປີດເຜີຍຂໍ້ມູນ
- ຍື່ນເອກະສານ ກ່ຽວກັບການສະເໜີຊື້ຮຸ້ນ;
- ພິຈາລະນາ ເອກະສານຂໍສະເໜີຊື້ຮຸ້ນ;
- ເປີດເຜີຍ ເອກະສານກ່ຽວກັບການສະເໜີຊື້ຮຸ້ນ, ຄຳເຫັນຂອງສະພາບໍລິຫານ ແລະ ທີ່ປຶກສາທາງດ້ານການ ເງິນອິດສະລະ;
- ດຳເນີນການຊື້ຮຸ້ນທັງໝົດ;
- ການຍົກເລີກການສະເໜີຊື້ຮຸ້ນທັງໝົດ;
- ຊຳລະ ແລະ ໂອນຮຸ້ນ;
- ລາຍງານຜົນການຊື້ທັງໝົດ.

- **ການເປີດເຜີຍການຖືຄອງຮຸ້ນຂອງຜູ້ສະເໜີຊື້ຮຸ້ນ**

ຜູ້ສະເໜີຊື້ຮຸ້ນທັງໝົດ ຕ້ອງເປີດເຜີຍການຖືຄອງຮຸ້ນຂອງຕົນ ແລະ ແຈ້ງຈຸດປະສົງໃນການຖືຄອງຮຸ້ນດັ່ງກ່າວ ຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ແລະ ຊ່ອງທາງອື່ນຕາມລະບຽບການທີ່ກ່ຽວຂ້ອງ ກຳນົດໄວ້ ພ້ອມທັງລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ບໍລິສັດຈົດ

ທະບຽນ ເພື່ອຊາບ ພາຍໃນ 1 ວັນລັດຖະການ ນັບແຕ່ວັນຖືຄອງຮຸ້ນ ຕາມການກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເປັນຕົ້ນໄປ. ສຳລັບຜູ້ສະເໜີຊື້ຮຸ້ນບາງສ່ວນ ບໍ່ຈຳເປັນຕ້ອງເປີດການຄືຄອງຮຸ້ນຂອງຕົນກໍໄດ້.

- **ການຍື່ນເອກະສານການສະເໜີຊື້ຮຸ້ນ**

ຜູ້ສະເໜີຊື້ຮຸ້ນທັງໝົດ ຕ້ອງຍື່ນເອກະສານປະກອບການສະເໜີຊື້ຮຸ້ນ ຕາມການກຳນົດໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອທົບທວນຄວາມຖືກຕ້ອງ ແລະ ສອດຄ່ອງ ຂອງເອກະສານ ພ້ອມທັງນຳສົ່ງເອກະສານດັ່ງກ່າວໃຫ້ຕະຫຼາດຫຼັກຊັບ ເພື່ອເປັນບ່ອນອີງ ແລະ ບໍລິສັດຈົດທະບຽນ ເພື່ອສະເໜີຕໍ່ ສະພາບໍລິຫານມີຄຳເຫັນຕໍ່ກັບການສະເໜີຊື້ຮຸ້ນ. ສະພາບໍລິຫານຂອງບໍລິສັດຈົດທະບຽນ ຕ້ອງແຕ່ງຕັ້ງທີ່ປຶກສາທາງດ້ານການເງິນອິດສະລະ ເພື່ອມີຄຳເຫັນຕໍ່ກັບການສະເໜີຊື້ຮຸ້ນ ດັ່ງກ່າວ ແລະ ເປັນບ່ອນອີງໃນການປະກອບຄຳເຫັນ.

ສຳລັບ ຜູ້ສະເໜີຊື້ຮຸ້ນບາງສ່ວນ ຕ້ອງຍື່ນເອກະສານການສະເໜີຊື້ຮຸ້ນ ຕາມການກຳນົດໃນວັກ ໜຶ່ງຂອງມາດຕານີ້ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາອະນຸມັດ.

- **ການພິຈາລະນາເອກະສານການສະເໜີຊື້ຮຸ້ນ**

ສຳນັກງານຄະນະກາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຄົ້ນຄວ້າເອກະສານປະກອບການສະເໜີຊື້ຮຸ້ນ ທັງໝົດ ແລະ ບາງສ່ວນ ພາຍໃນກຳນົດເວລາ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຜົນຄົ້ນຄວ້າ ໃຫ້ແກ່ ຜູ້ສະເໜີຊື້ ຊາບ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາ ຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງ ເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມຈາກຜູ້ທີ່ມີຈຸດປະສົງສະເໜີຊື້ ຫຼື ເຊີນຜູ້ທີ່ກ່ຽວຂ້ອງເຂົ້າມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

- **ການເປີດເຜີຍ ໜັງສືສະເໜີຊື້ຮຸ້ນ, ຄຳເຫັນຂອງສະພາບໍລິຫານ ແລະ ທີ່ປຶກສາທາງດ້ານການເງິນອິດສະລະ**

ຜູ້ສະເໜີຊື້ຮຸ້ນ ແລະ ບໍລິສັດຈົດທະບຽນ ຕ້ອງເປີດເຜີຍ ໜັງສືສະເໜີຊື້ຮຸ້ນ, ຄຳເຫັນ ຂອງສະພາບໍລິຫານ ແລະ ຄຳເຫັນຂອງທີ່ປຶກສາທາງດ້ານການເງິນອິດສະລະ ຜ່ານຊ່ອງທາງລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ, ເວັບໄຊບໍລິສັດຈົດທະບຽນ ແລະ ຜ່ານຊ່ອງທາງອື່ນຕາມລະບຽບການກ່ຽວຂ້ອງກຳນົດໄວ້ ເປັນເວລາ 5 ວັນ ຕໍ່ເນື່ອງ ນັບແຕ່ວັນໄດ້ຮັບຄຳເຫັນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

- **ການດຳເນີນການຊື້ຮຸ້ນ**

ຜູ້ສະເໜີຊື້ຮຸ້ນທັງໝົດ ແລະ ບາງສ່ວນ ຕ້ອງແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອດາເນີນການຊື້ຮຸ້ນແທນຕົນ ແລະ ໃຫ້ສຳເລັດພາຍໃນເວລາ 30 ວັນ ນັບແຕ່ວັນທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ແຈ້ງຕອບ ຫຼື ອະນຸມັດ ເປັນຕົ້ນໄປ.

ສຳລັບ ການສະເໜີຊື້ຮຸ້ນບາງສ່ວນ ພາຍຫຼັງສິ້ນສຸດໄລຍະເວລາຮັບຊື້ຮຸ້ນ ກໍລະນີມີຜູ້ຖືຮຸ້ນຕົກລົງຂາຍຮຸ້ນ ເກີນຈຳນວນທີ່ຜູ້ສະເໜີຊື້ຮຸ້ນ ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ການຈັດສັນຮຸ້ນດັ່ງກ່າວ ໃຫ້ຜູ້ຖືຮຸ້ນຕ້ອງດຳເນີນການຕາມວິທີສະເລ່ຍໃຫ້ຜູ້ຖືຮຸ້ນທັງໝົດທີ່ຕົກລົງຂາຍຮຸ້ນ.

ກໍລະນີ ການສະເໜີຊື້ຮຸ້ນຂອງ ບໍລິສັດຈົດທະບຽນ ເປັນສາເຫດໃຫ້ບໍລິສັດຈົດທະບຽນຂາດສະຖານະພາບເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຜູ້ສະເໜີຊື້ຮຸ້ນ ຕ້ອງສະເໜີຊື້ຮຸ້ນສ່ວນທີ່ເຫຼືອທັງໝົດຈາກຜູ້ຖືຮຸ້ນ ໃນລາຄາດຽວກັນ ເພີ່ມອີກ 10 ວັນລັດຖະການ ນັບແຕ່ ວັນສິ້ນສຸດການສະເໜີຊື້ຮຸ້ນ ເປັນຕົ້ນໄປ.

- **ການຍົກເລີກການສະເໜີຊື້ຮຸ້ນ**

ຜູ້ສະເໜີຊື້ຮຸ້ນທັງໝົດ ແລະ ບາງສ່ວນ ສາມາດຍົກເລີກການສະເໜີຊື້ຮຸ້ນໄດ້ ໃນກໍລະນີ ດັ່ງນີ້:

- ໃນໄລຍະຂອງການດຳເນີນການສະເໜີຊື້ຮຸ້ນ ຫາກມີເຫດການໃດໜຶ່ງເກີດຂຶ້ນ ຊຶ່ງອາດສ້າງຄວາມເສຍຫາຍ ຕໍ່ຖານະການເງິນ ແລະ ຜົນການດຳເນີນທຸລະກິດ ຂອງບໍລິສັດຈົດທະບຽນ;
- ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ຜູ້ສະເໜີຊື້ຮຸ້ນ ຕ້ອງຍື່ນໜັງສືຂໍຍົກເລີກ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພ້ອມທັງ ແຈ້ງ ຕໍ່ ຕະຫຼາດຫຼັກຊັບ ແລະ ບໍລິສັດຈົດທະບຽນ ເພື່ອຊາບ.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາໜັງສືສະເໜີຂໍຍົກເລີກໃຫ້ແກ້ຜູ້ຮ້ອງຂໍ ພາຍໃນ ເວລາ 10 ວັນລັດຖະການ ນັບແຕ່ໄດ້ຮັບໜັງສືສະເໜີຂໍຍົກເລີກເປັນຕົ້ນໄປ.

ຜູ້ສະເໜີຊື້ຮຸ້ນ ຕ້ອງເປີດເຜີຍກ່ຽວກັບການຍົກເລີກການສະເໜີຊື້ຮຸ້ນ ໃຫ້ມວນຊົນຮັບຊາບ ຜ່ານ ລະບົບເປີດເຜີຍ ຂໍ້ມູນຂອງຕະຫຼາດຫຼັກຊັບ ພາຍໃນ 1 ວັນລັດຖະການ ນັບແຕ່ວັນໄດ້ຮັບການເຫັນດີຈາກສຳນັກງານຄະນະກຳມະ ການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

- **ການຊຳລະ ແລະ ການໂອນຮຸ້ນ**

ພາຍຫຼັງບໍລິສັດຫຼັກຊັບທີ່ເປັນຕົວແທນໃນການສະເໜີຊື້ຮຸ້ນ ໄດ້ຮັບແບບຟອມຕົກລົງຂາຍຮຸ້ນຂອງຜູ້ຖືຮຸ້ນ ບໍລິສັດ ຫຼັກຊັບຕ້ອງດຳເນີນການລ໋ອກຮຸ້ນດັ່ງກ່າວ. ພາຍຫຼັງສິ້ນສຸດໄລຍະເວລາຮັບຊື້ຮຸ້ນ 1 ວັນ ລັດຖະການ ບໍລິສັດຫຼັກຊັບ ດັ່ງກ່າວ ຕ້ອງສະເໜີຕໍ່ ຕະຫຼາດຫຼັກຊັບ ເພື່ອດຳເນີນການຊຳລະ ແລະ ໂອນຮຸ້ນ ຕາມລະບຽບການທີ່ກ່ຽວຂ້ອງ.

- **ການລາຍງານຜົນການຊື້ຮຸ້ນ**

ຜູ້ສະເໜີຊື້ຮຸ້ນທັງໝົດ ຕ້ອງລາຍງານຜົນການຊື້ຮຸ້ນຂອງບໍລິສັດຈົດທະບຽນ ຕໍ່ ສຳນັກງານຄະນະກາມະການຄຸ້ມ ຄອງຫຼັກຊັບ ພາຍໃນເວລາ 5 ວັນລັດຖະການ ນັບແຕ່ວັນ ສິ້ນສຸດການຊື້ຮຸ້ນ ເປັນຕົ້ນໄປ ພ້ອມທັງເປີດເຜີຍຜົນການ ສະເໜີຊື້ຮຸ້ນດັ່ງກ່າວ ໃຫ້ມວນຊົນຮັບຊາບ ຜ່ານ ລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ພາຍໃນ 5 ວັນລັດຖະ ການ.

ສຳລັບ ການສະເໜີຊື້ຮຸ້ນບາງສ່ວນ ຕ້ອງລາຍງານຜົນການຊື້ຮຸ້ນຂອງບໍລິສັດຈົດທະບຽນ ຕໍ່ ສຳນັກງານຄະນະ ກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 3 ວັນລັດຖະການ ນັບແຕ່ວັນ ສິ້ນສຸດການຊື້ຮຸ້ນ ເປັນຕົ້ນໄປ. ພາຍຫຼັງ ໄດ້ຮັບການຢັ້ງຢືນຜົນການຊື້ຮຸ້ນດັ່ງກ່າວ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍລິສັດຫຼັກຊັບ ທີ່ເຮັດ ໜ້າທີ່ໃນການສະເໜີຊື້ຮຸ້ນ ຕ້ອງດຳເນີນການຊຳລະ ແລະ ໂອນຮຸ້ນ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງ ຂໍ້ຕົກລົງສະບັບນີ້. ພ້ອມທັງເປີດເຜີຍຜົນການສະເໜີຊື້ຮຸ້ນດັ່ງກ່າວ ໃຫ້ມວນຊົນຮັບຊາບ ຜ່ານ ລະບົບເປີດເຜີຍຂໍ້ ມູນຂອງຕະຫຼາດຫຼັກຊັບ ພາຍໃນ 5 ວັນລັດຖະການ.

- **ການກຳນົດລາຄາຊື້ຂາຍຮຸ້ນ:**

  - ການກຳນົດລາຄາຊື້ຂາຍຮຸ້ນ ລະຫວ່າງຜູ້ລົງທຶນໃໝ່ ແລະ ຜູ້ຖືຮຸ້ນລາຍໃຫຍ່ (CYC ແລະ LCS) ນັ້ນ ຈະໃຊ້ລາຄາທີ່ທັງສອງຝ່າຍເຈລະຈາຕົກລົງກັນຕາມສັນຍາ.

  - ການກຳນົດລາຄາຊື້ຂາຍຮຸ້ນ ລະຫວ່າງຜູ້ລົງທຶນໃໝ່ ແລະ ຜູ້ຖືຮຸ້ນລາຍຍ່ອຍ:

ພາຍຫຼັງທີ່ ຜູ້ລົງທຶນໃໝ່ ສຳເລັດການຊື້ຮຸ້ນ ບໍລິສັດ ຊິມັງລາວ ມະຫາຊົນ ຈາກ CYC ແລະ LCS ແລ້ວ, ຈະ ເຮັດໃຫ້ ຜູ້ລົງທຶນໃໝ່ ກາຍເປັນຜູ້ຖືຮຸ້ນທີ່ມີລັກສະນະຄອບຄອງກິດຈະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019, ສະນັ້ນ ຜູ້ ລົງທຶນໃໝ່ ຕ້ອງສະເໜີຊື້ຮຸ້ນທັງໝົດ ຫຼື ບາງສ່ວນຈາກຜູ້ຖືຮຸ້ນລາຍອື່ນ ໂດຍອີງໃສ່ລາຄາປິດສະເລ່ຍຖ່ວງນ້ຳໜັກ ຂອງຮຸ້ນ ບໍລິສັດ ຊິມັງລາວ ມະຫາຊົນ ໃນຕະຫຼາດຫຼັກຊັບລາວ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງ ຫຼັກຊັບ ເພື່ອນຳໃຊ້ເປັນບ່ອນອີງໃນການກຳນົດລາຄາຊື້-ຂາຍຮຸ້ນ.

ໃນກໍລະນີນຳໃຊ້ຮູບແບບການສະເໜີຊື້ຮຸ້ນທັງໝົດ ຫລື ບາງສ່ວນຈາກຜູ້ຖືຮຸ້ນລາຍຍ່ອຍ ອີງຕາມອ່າງຂໍ້ຕົກລົງ ການກຳນົດລາຄາຮຸ້ນ ຕ້ອງແມ່ນລາຄາຮຸ້ນສູງສຸດ ທີ່ຜູ້ສະເໜີຊື້ຮຸ້ນ ໄດ້ເຄີຍຊື້ຮຸ້ນດັ່ງກ່າວ 90 ວັນ ນັບແຕ່ວັນສະເໜີ ຊື້ຮຸ້ນ ຄືນຫຼັງ ແລະ ລາຄາດັ່ງກ່າວ ຕ້ອງບໍ່ຕ່ຳກວ່າລາຄາຕະຫຼາດ. ກໍລະນີຜູ້ສະເໜີຊື້ຮຸ້ນ ບໍ່ເຄີຍຊື້ຮຸ້ນດັ່ງກ່າວມາກ່ອນ ແມ່ນໃຫ້ຖືເອົາລາຄາສະເລ່ຍຖ່ວງນ້ຳໜັກຄືນຫຼັງ ຂອງຮຸ້ນດັ່ງກ່າວ ໃນຮອບ 90 ວັນ ນັບແຕ່ວັນສະເໜີຊື້ຮຸ້ນ ເປັນຕົ້ນໄປ.

- ການເຂົ້າສູ່ຂະບວນການຟື້ນຟູກິດຈະການ,ການຈົດທະບຽນທາງອ້ອມ ແລະການກັບຄືນມາຊື້ຂາຍໄດ້ຢ່າງເປັນປົກກະຕິຂອງຮຸ້ນ ບຊລ ພາຍຫຼັງສຳເລັດການຟື້ນຟູກິດຈະການ:

ການປ່ຽນແປງໂຄງສ້າງຜູ້ຖືຮຸ້ນ ແລະຂະແໜງທຸລະກິດຂອງ ບຊລ ສາມາດດຳເນີນການໄດ້ ໂດຍບໍ່ໄດ້ເຮັດໃຫ້ສະຖານະການເປັນບໍລິສັດຈົດທະບຽນສິ້ນສຸດ. ໃນນັ້ນ, ບຊລ ຕ້ອງດຳເນີນການຈົດທະບຽນທາງອ້ອມ ຕາມເງື່ອນໄຂກຳນົດຂອງ ຕລຊລ. ລາຍລະອຽດລະບຸໃນ"ທັດສະນະຂອງ ຕລຊລ ຕໍ່ການຮັກສາສະຖານະເປັນບໍລິສັດຈົດທະບຽນຂອງ ບຊລ (ເອກະສານຊ້ອນທ້າຍ ເລກທີ 02).

ຄ. ນິຕິກຳຕ່າງໆ ທີ່ກ່ຽວຂ້ອງ:

1. ການປ່ຽນຂະແໜງການທຸລະກິດ:

ໂດຍອີງໃສ່ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ ລົງວັນທີ 17 ພະຈິກ 2016 ມາດຕາ 47 ແລະມາດຕາ 67 ຂໍ້ 6 ໄດ້ກຳນົດສິດຂອງຜູ້ລົງທຶນວ່າ: ຜູ້ລົງທຶນມີສິດຂໍປ່ຽນວັດຖຸປະສົງ ຫຼື ກິດຈະການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຫາກບໍ່ມີປະສິດທິຜົນ ເນື່ອງຈາກການປ່ຽນແປງນະໂຍບາຍ, ກົດໝາຍ ແລະ ລະບຽບການ. ໝາຍຄວາມວ່າ ຫຼັງຈາກຜ່ານການເຫັນດີເປັນເອກະພາບຂອງສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນແລ້ວ ບໍລິສັດຊີມັງລາວ ມະຫາຊົນ ສາມາດນຳສະ ເໜີ ເຖິງຫ້ອງການບໍລິການ ການລົງທຶນ ປະຕູດຽວ ທີ່ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ ລາຍງານຂັ້ນເທິງພິຈາລະນາຕາມລະບຽບການ ແລະ ກົດໝາຍ ເພື່ອຂໍປ່ຽນເປັນຂະແໜງການທຸລະກິດໃໝ່.

2. ຂັ້ນຕອນການຕໍ່ອາຍຸສັນຍາລົງທຶນ:

ເນື່ອງຈາກ ບໍລິສັດຊີມັງລາວ ມະຫາຊົນ ມີຄວາມຈຳເປັນຕ້ອງໄດ້ປ່ຽນຂະແໜງກິດຈະການ ຈາກຜະລິດ ແລະ ຈຳໜ່າຍຊີມັງ ເປັນຂະແໜງການທ່ອງທ່ຽວ ພ້ອມນັ້ນ, ສັນຍາເດີມ ກໍຈະໝົດອາຍຸພາຍໃນປີ 2028ນີ້, ສະນັ້ນ, ຜູ້ລົງທຶນສາມາດສະເໜີຫາລັດຖະບານເພື່ອຂໍເຊັນສັນຍາໃໝ່ ຮັບໃຊ້ເປົ້າໝາຍກິດຈະການພັດທະນາການທ່ອງທ່ຽວ ໂດຍຈະກຳນົດອາຍຸສັນຍາໃໝ່ ຕາມກົດໝາຍກຳນົດ.

ງ. ສິດສຳປະທານສຳຫຼວດແລະຂຸດຄົ້ນບໍ່ແຮ່:

ເນື່ອງຈາກ ບໍລິສັດຊີມັງລາວມະຫາຊົນ ປ່ຽນຂະແໜງການທຸລະກິດ ຈາກການຜະລິດແລະຈຳໜ່າຍຊີມັງ ເປັນການພັດທະນາການທ່ອງທ່ຽວ ສະນັ້ນ, ສະເພາະສິດສຳປະທານບໍ່ແຮ່ ທີ່ໄດ້ຮັບອະນຸມັດມາກ່ອນແລ້ວ ສາມາດຈັດຕັ້ງປະຕິບັດໄດ້ ສອງກໍລະນີດັ່ງນີ້:

1. ການຄົງຮັກສາໄວ້ສິດສຳປະທານ:

ໃນກໍລະນີທີ່ທາງບໍລິສັດ ຫາກມີຈຸດປະສົງທີ່ຈະດຳເນີນທຸລະກິດຂະແໜງການທ່ອງທ່ຽວ ໄປພ້ອມກັບການປະຕິບັດສັນຍາທີ່ໄດ້ເຊັນກັບລັດຖະບານ ສະບັບລົງວັນທີ 17 ພະຈິກ 1998 ແລະ ສັນຍາເພີ່ມຕື່ມສະບັບລົງວັນທີ 25 ພະຈິກ 2013ນັ້ນ, ບໍລິສັດຊີມັງລາວ ມະຫາຊົນ ສາມາດຮັກສາສິດສຳປະທານສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ ທີ່ຂຶ້ນກັບສັນຍາລົງທຶນການກໍ່ສ້າງໂຮງງານຊີມັງວັງວຽງ2 ທີ່ໄດ້ຖືກອະນຸມັດມາກ່ອນແລ້ວ ໄວ້ໄດ້ ແຕ່ຕ້ອງໄດ້ດັດແກ້ເນື້ອໃນສັນຍາທີ່ເຊັນກັບລັດຖະບານຄືນໃໝ່ ໂດຍຈະຮັກສາໄວ້ແຕ່ເນື້ອໃນກ່ຽວກັບການສຳປະທານຂຸດຄົ້ນວັດຖຸດິບ ສ່ວນເນື້ອໃນອື່ນທີ່ບໍ່ກ່ຽວຂ້ອງຕ້ອງຕັດອອກ ຫຼື ຈະສ້າງເປັນສັນຍາສຳປະທານແຮ່ທາດ (ສັນຍາພັດທະນາບໍ່ແຮ່)ສະບັບໃໝ່ກໍໄດ້, ໂດຍຈະໄດ້ຮັບການພິຈາລະນາພິເສດ ໃນນາມທີ່ເປັນຜູ້ພັດທະນາໃນເຂດສຳປະທານນັ້ນມາກ່ອນແລ້ວ.

ສະເພາະກິດຈະການຊອກຄົ້ນ ແລະ ສຳຫຼວດບໍ່ຖ່ານຫີນຄອນພຸກ ເມືອງຫີນເຫີບ ແຂວງວຽງຈັນນັ້ນ ເນື່ອງຈາກມີສັນຍາລົງທຶນກັບລັດຖະບານຕ່າງຫາກ, ບຊລ ສາມາດຮັກສາສິດສຳປະທານໄວ້ ຕາມເນື້ອໃນທີ່ລະບຸໄວ້ໃນສັນຍາລົງທຶນດັ່ງກ່າວ.

2. ການໂອນປ່ຽນສິດສຳປະທານ:

ໃນກໍລະນີຫາກບໍລິສັດຊິມັງລາວຫາກມີຈຸດປະສົງໂອນຫຼືປ່ຽນສິດສຳປະທານສຳຫຼວດ ແລະ ຂຸດຄົ້ນບໍ່ແຮ່ ໃຫ້ເປັນກຳມະສິດຂອງບໍລິສັດພາຍໃນຂາຮຸ້ນ ຫຼື ບໍລິສັດອື່ນ ເປັນຜູ້ສືບຕໍ່ໃນການສຳປະທານເພື່ອສຳຫຼວດແລະຂຸດຄົ້ນວັດຖຸດິບປ້ອນໂຮງງານຊິມັງ ກໍສາມາດຈັດຕັ້ງປະຕິບັດໄດ້ ໂດຍໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ເປັນຕົ້ນ ກົດໝາຍສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍສ່ວຍສາອາກອນ... ແຕ່ທັງໝົດນັ້ນ ຕ້ອງໄດ້ນຳສະເໜີ ເຖິງກະຊວງແຜນການແລະການລົງທຶນ ໃນນາມຄູ່ສັນຍາເພື່ອຮັບຮູ້ການປ່ຽນແປງເຈົ້າຂອງສິດສຳປະທານດັ່ງກ່າວ.

ຈ. ການປະກອບພະນັກງານ:

1. ການປະກອບພະນັກງານລາວ:

ພະນັກງານລາວທີ່ຈະປະກອບເຂົ້າໃນໂຄງການຈະຕ້ອງອີງໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານ ອາດຈະເປັນດ້ານຈຳນວນ ຫຼື ວິຊາສະເພາະທີ່ມີຄວາມກ່ຽວພັນກັບວຽກງານຕົວຈິງ ທັງນັ້ນທັງນີ້ ຕ້ອງໃຫ້ບຸລິມະສິດຂອງແຮງງານທີ່ເປັນຄົນລາວກ່ອນເປັນກໍລະນີພິເສດ, ພ້ອມນັ້ນ, ໃຫ້ຊ່ວຍພິຈາລະນາຮັບເອົາພະນັກງານ ທີ່ເຄີຍເຮັດວຽກຢູ່ບໍລິສັດຊິມັງລາວມະຫາຊົນ ເຂົ້າມາປະກອບສ່ວນວຽກງານ ຕາມຄວາມເໝາະສົມ.

2. ການປະກອບພະນັກງານຕ່າງປະເທດ:

ຕ້ອງປະຕິບັດໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ ລົງວັນທີ 24/12/2013 ໂດຍສະເພາະ ພາກທີ III ໝວດທີ 5 ແລະ ພາກທີ IV ໝວດທີ 5 ໄດ້ກຳນົດໄວ້.

ສ. ຄາດຄະເນ ສິ່ງທ້າທາຍ ທີ່ອາດຈະເຮັດໃຫ້ແຜນຟື້ນຟູບໍ່ສຳເລັດ:

ຜ່ານການປຶກສາຫາລືຂອງຄະນະຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກ 1731 ເຫັນວ່າ ໃນທ່າມກາງການຈັດຕັ້ງປະຕິບັດແຜນການຟື້ນຟູທຸລະກິດ ຂອງບໍລິສັດຊິມັງລາວ ມະຫາຊົນ ສະບັບນີ້ ອາດຈະເກີດມີບາງບັນຫາທີ່ຄາດວ່າຈະເປັນສິ່ງທ້າທາຍ ເຮັດໃຫ້ໂຄງການບໍ່ປະສົບຜົນສຳເລັດ ມີດັ່ງນີ້:

1. ບຊລ ອາດຈະບໍ່ສາມາດເກັບກູ້ໜີ້ຕ້ອງຮັບໄດ້ທັງໝົດ ທ່ວງທັນຕາມຄາດໝາຍກຳນົດເວລາ ເຮັດໃຫ້ບໍ່ສາມາດສະສາງໜີ້ຕ້ອງສົ່ງໃຫ້ແກ່ເຈົ້າໜີ້ຕ່າງໆ (ລວມທັງການຈ່າຍເງິນອຸດໜູນອອກການໃຫ້ແກ່ພະນັກງານ) ຊຶ່ງອາດຈະນຳໄປສູ່ການຟ້ອງຮ້ອງ ແລະ ແກ້ໄຂຕາມຂະບວນການຍຸດຕິທຳ.
2. ບຊລ ອາດຈະບໍ່ຄົບຕາມເງື່ອນໄຂຕາມໃບແຈ້ງເຈດຈຳນົງຊື້ຂາຍຮຸ້ນສະບັບ CYC 2021-QGB 003ລົງວັນທີ 17/03/2021 ເຮັດໃຫ້ ບໍລິສັດ ເຄືອຂ່າຍເຕັກໂນໂລຊີ ຊຽນຫານ ຢຸນນານຈຳກັດ ຍົກເລີກການຊື້ຮຸ້ນ.
3. ບໍ່ສາມາດຄາດຄະເນລ່ວງໜ້າໄດ້ ເຖິງຄວາມສຳເລັດໃນການພັດທະນາ ການທ່ອງທ່ຽວ ຂອງບໍລິສັດດັ່ງກ່າວ.

4. ເຖິງແມ່ນວ່າໂຄງການດັ່ງກ່າວ ເປັນການພັດທະນາທ່ອງທ່ຽວວັດທະນະທຳ ທີ່ເປັນເອກະລັກສະເພາະ ແຕ່ ກິດຈະກຳຂອງໂຄງການບາງປະເພດ ອາດຈະມີຄວາມຄ້າຍຄືກັບແຫຼ່ງທ່ອງທ່ຽວອື່ນ ຈຶ່ງອາດເກີດມີການແກ້ງ ແຍ້ງແຂ່ງຂັນກັບໂຄງການອື່ນກໍອາດເປັນໄດ້.

ຊ. ຜົນດີ ແລະ ສິ່ງທ້າທາຍ ຂອງແຜນຟື້ນຟູ :

ຜົນດີ ດ້ານຕັ້ງໜ້າ :

1. ຮັກສາໄດ້ພາບພິດ ປົດບາດຊື່ສຽງ ແລະມູນເຊື້ອຄວາມສາມັກຄີມິດຕະພາບທີ່ຍືນຍົງ ຂອງສອງ ລັດຖະບານ-ປະຊາຊົນລາວ-ຈີນ ໄວ້ຕະຫຼອດການ.
2. ເປັນເງື່ອນໄຂພື້ນຖານ ໃຫ້ແກ່ການສືບຕໍ່ເສີມຂະຫຍາຍມູນເຊື້ອ ທີ່ເຄີຍເປັນບໍລິສັດຕົວແບບອັນດີ ໃນ ການຮ່ວມມືສອງຊາດລາວ-ຈີນ.
3. ຮັກສາພາບພິດຂອງ ບຊລ ໄວ້ ທັງຍັງຄົງສະຖານະ ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວຕໍ່ ໄປ ແລະ ຄົງຮັກສາຍີ່ຫໍ້ກະທິງທອງໄວ້ຄືເກົ່າ.
4. ຖືກຕ້ອງ ສອດຄ່ອງກັບແນວທາງ ແລະ ທິດຊີ້ນຳຂອງລັດຖະບານ ທີ່ສ້າງເມືອງວັງວຽງເປັນເມືອງທ່ອງ ທ່ຽວ ບວກກັບທ່າແຮງດ້ານທີ່ຕັ້ງຂອງໂຄງການ ສາມາດຮັບປະກັນການພັດທະນາແບບຍືນຍົງຂອງ ບໍລິສັດ.
5. ຜ່ານການປ່ຽນຂະແໜງທຸລະກິດໃໝ່ ສາມາດຍັງຮັກສາ ແລະ ນຳໃຊ້ສິ່ງປຸກສ້າງເດີມ ແລະ ຍີ່ຫໍ້ ທີ່ເຄີຍມີ ຊື່ສຽງໄວ້ຄືເກົ່າ.
6. ສາມາດຄັດເລືອກພະນັກງານມີປະສົບການຈຳນວນນຶ່ງກັບຄືນມາເຮັດວຽກ ຕາມຄວາມຕ້ອງການຂອງ ວຽກງານ ແລະ ສາມາດສ້າງໂອກາດ ໃນການເພີ້ມວຽກເຮັດງານທຳໃຫ້ປະຊາຊົນໃນທ້ອງຖິ່ນ.
7. ມີສິ່ງປຸກສ້າງ ແລະ ສິ່ງເອື້ອອຳນວຍຄວາມສະດວກແລ້ວ ສາມາດນຳໃຊ້ ຕຶກອາຄານ ສິ່ງປຸກສ້າງ ຫົນທາງ ລະບົບນ້ຳປະປາ ໄຟຟ້າ ແລະອື່ນໆ ຮັບໃຊ້ເຂົ້າໃນການພັດທະນາທຸລະກິດທ່ອງທ່ຽວ ແລະ ວັດທະນະທຳ.
8. ພະນັກງານເກົ່າຈຳນວນໜຶ່ງທີ່ເຄີຍເຮັດວຽກຢູ່ ບຊລ ມາກ່ອນ ມີຄວາມຫວັງຈະໄດ້ສະໝັກເຂົ້າເປັນ ພະນັກງານ ຂອງໂຄງການດັ່ງກ່າວ.
9. ໄດ້ມີເອກະສານຢັ້ງຢືນຕົວຕົນ ຂອງບໍລິສັດເຄືອຂ່າຍເຕັກໂນໂລຊີຢຸນນານສຽນຫານ ຈຳກັດ ຈາກ ຫ້ອງການເສດຖະກິດ ແລະ ການຄ້າ ສະຖານທູດ ສປ ຈີນ ປະຈຳລາວ.
10. ມີສະຖານທີ່ທ່ອງທ່ຽວ ທີ່ທັນສະໄໝ ແລະ ຄົບວົງຈອນ ເພີ້ມຂຶ້ນ, ເປັນທາງເລືອກທີ່ດີ ສາມາດດຶງດູດ ໃຫ້ແກ່ນັກທ່ອງທ່ຽວພາຍໃນ ແລະຕ່າງປະເທດ ມາທ່ຽວເມືອງວັງວຽງຫຼາຍຂຶ້ນ.

ສິ່ງທ້າທາຍ,ດ້ານລົບ :

1. ບໍ່ສາມາດດຳເນີນທຸລະກິດ ຂະແໜງຊີມັງໄດ້ຄືເກົ່າ.
2. ການດຶງດູດນັກລົງທຶນ ແລະ ການປ່ຽນເປັນທຸລະກິດທ່ອງທ່ຽວວັດທະນະທຳ ຕ້ອງໄດ້ທຳຄວາມເຂົ້າໃຈ ແລະ ຕ້ອງໄດ້ຮັບການສະໜັບສະໜູນ ຈາກທຸກພາກສ່ວນທີ່ກ່ຽວຂ້ອງ ຂອງພາກລັດ ແລະ ທົ່ວສັງຄົມ ຢ່າງຈິງຈັງ.

3. ໃນໄລຍະທຳອິດຂອງການຫັນປ່ຽນ ເປັນທຸລະກິດທ່ອງທ່ຽວ ຈະບໍ່ທັນສາມາດສ້າງຜົນກຳໄລແກ່ຂາຮຸ້ນໄດ້.
4. ການບໍລິການທ່ອງທ່ຽວຢູ່ເຂດເມືອງວັງວຽງ ເປັນທຸລະກິດທີ່ມີການແຂ່ງຂັນສູງ ມີຫຼາຍພາກສ່ວນແຂ່ງຂັນກັນລົງທຶນ ບໍ່ວ່າໃນໄລຍະຜ່ານມາ ກໍຄືອະນາຄົດ ສະນັ້ນ ໂຄງການນີ້ຕ້ອງພະຍາຍາມບຸກເບີກ ແລະ ເລີ່ມຕົ້ນໂດຍໄວ ພ້ອມທັງ ຄົ້ນຄວ້າສ້າງຜະລິດຕະພັນດ້ານທ່ອງທ່ຽວແປກໃໝ່ ເພື່ອເປັນຈຸດຂາຍ ແລະ ຮັບມືກັບການແຂ່ງຂັນໃນອະນາຄົດ.

VI. ຂໍ້ສະເໜີທີ່ຂໍຄວາມຊ່ວຍເຫລືອ ຈາກລັດຖະບານ:

1) ຂໍສະເໜີໃຫ້ລັດຖະບານຊ່ວຍສະໜັບສະໜູນການຮັກສາໃຫ້ ບຊລ ຢູ່ໃນສະຖານະ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວຕໍ່ໄປ, ເນື່ອງຈາກ ການປະກອບຮຸ້ນໃໝ່ຂອງ ບຊລ ຈະເລັ່ງໃສ່ການພັດທະນາຂະແໜງທຸລະກິດ ທ່ອງທ່ຽວ ແລະ ວັດທະນະທຳ ທີ່ເປັນເອກະລັກຂອງທ້ອງຖິ່ນ ມີລັກສະນະພິເສດ ສາມາດສ້າງລາຍໄດ້ແກ່ຂາຮຸ້ນ,ປະຕິບັດພັນທະໃຫ້ລັດ ໄດ້ຫຼາຍຂຶ້ນ, ໂຄງການມີອະນາຄົດສົດໃສ, ສ້າງຄຸນຄ່າ-ຊື່ສຽງໃຫ້ແກ່ບໍລິສັດຈົດທະບຽນ ແລະ ຈະສາມາດດຶງດູດຜູ້ລົງທຶນໃໝ່ເຂົ້າມາຢ່າງຕໍ່ເນື່ອງ. ກົງກັນຂ້າມ, ຫາກຖືກຖອດຖອນຈາກບໍລິສັດຈົດທະບຽນ ບໍລິສັດຈະຕົກໃນກໍລະນີລົ້ມລະລາຍ ຊັບສົມບັດຕ່າງໆກໍຈະປະຖິ້ມ ໝົດຄຸນຄ່າ, ບໍ່ໄດ້ໃຊ້ປະໂຫຍດ ໃນທີ່ສຸດ ກໍສ້າງຄວາມເສຍຫາຍແກ່ຜູ້ລົງທຶນ.
2) ຂໍສະເໜີໃຫ້ລັດຖະບານ ພິຈາລະນາອະນຸມັດຫັນປ່ຽນຈາກຂະແໜງຊີມັງ ມາເປັນຂະແໜງການທ່ອງທ່ຽວ ເປັນກິດຈະກຳຫຼັກຂອງບໍລິສັດ.
3) ສະເໜີຂໍຕໍ່ອາຍຸສຳປະທານ (ສັນຍາລົງທຶນ) : ໃນຂັ້ນຕອນດຳເນີນແຜນການປະກອບຮຸ້ນ ຫຼື ຟື້ນຟູ ຈະແມ່ນການປ່ຽນຂະແໜງການພັດທະນາທ່ອງທ່ຽວ ແລະ ວັດທະນາທຳ, ການລົງທຶນດັ່ງກ່າວໃນໄລຍະສັ້ນຈະບໍ່ສາມາດເກີດປະສິດທິຜົນຕໍ່ການລົງທຶນໄດ້ ສະນັ້ນ ຂໍສະເໜີລັດຖະບານ ອະນຸມັດຕໍ່ອາຍຸສັນຍາລົງທຶນຂອງບໍລິສັດ ຊີມັງລາວ ມະຫາຊົນ ຫຼື ຊ່ວຍອຳນວຍຄວາມສະດວກ ໃນການສ້າງສັນຍາລົງທຶນໃໝ່ໃຫ້ສຳເລັດໂດຍໄວ ແລະ ສະເໜີໃຫ້ພິຈາລະນາການກຳນົດອາຍຸສັນຍາໃໝ່ ໃຫ້ໂຄງການດັ່ງກ່າວ 50 ປີຂຶ້ນໄປ.
4) ຂໍຄວາມຊ່ວຍເຫຼືອ ໃນການແກ້ໄຂບັນຫາ ແກ່ຍາວຊຳລະສະສາງໜີ້ຕ້ອງຮັບຂອງບໍລິສັດ, ຂໍຄວາມຊ່ວຍເຫຼືອຈາກຂະ

   ແໜງທີ່ກ່ຽວຂ້ອງ ຂອງລັດຖະບານຊ່ວຍຊຸກຍູ້ ກົດດັນລູກຄ້າທີ່ຕິດໜີ້ ຊຳລະໜີ້ໃຫ້ບໍລິສັດໄດ້ໄວຂຶ້ນ ໂດຍຈະເປັນທາງກົງ ຫຼື ທາງອ້ອມ ເພື່ອເຮັດໃຫ້ບໍລິສັດສາມາດແກ້ໄຂບັນຫາໜີ້ສິນ ຫຼັງຈາກຢຸດຕິການຜະລິດ ເພື່ອເຮັດໃຫ້ບໍລິສັດສາມາດຫຼຸດຜ່ອນພາລະ ເພື່ອບັນລຸການພັດທະນາໃຫ້ໄດ້ໂດຍໄວ.
5) ສະເໜີຂໍໃຫ້ລັດຖະບານມີນະໂຍບາຍຫຼຸດຜ່ອນພາສີ-ອາກອນໃຫ້ແກ່ໂຄງການດັ່ງກ່າວ.
6) ສະເໜີນຳເອົາໂຄງການຮ່ວມມືດັ່ງກ່າວ ຈັດເຂົ້າແຜນຮ່ວມມືລາວ-ຈີນ, ລວມທັງການຮ່ວມມືຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ ແຜນແມ່ບົດການຮ່ວມມືດ້ານເສດຖະກິດ-ເຕັກນິກ ລະຫວ່າງສອງລັດຖະບານ ແລະ ກົນໄກການຮ່ວມມື ລະຫວ່າງແຂວງພາກເໜືອ ກັບແຂວງຢູນນານ ເພື່ອສ້າງເງື່ອນໄຂ ໃຫ້ໂຄງການໄດ້ຮັບການສະໜັບສະໜູນດ້ານນະໂຍບາຍ, ທຶນຮອນ ແລະ ການອຳນວຍຄວາມສະດວກຈາກອົງການກ່ຽວຂ້ອງພາກລັດ ຂອງສອງປະເທດ.

VI. ຄຳເຫັນສະຫຼຸບ ແລະ ຕີລາຄາ ຂອງຄະນະຮັບຜິດຊອບ 1731:

1. ເພື່ອຊ່ວຍໃຫ້ບໍລິສັດຊີມັງລາວ ສາມາດຟື້ນຟູທຸລະກິດຂອງຕົນໄດ້ ພາຍໃຕ້ສະພາບ ແລະ ເງື່ອນໄຂທີ່ບໍ່ມີຜູ້ ລົງທຶນ ສົນໃຈໃນການດຳເນີນທຸລະກິດຂະແໜງຊີມັງຕໍ່ໄປນັ້ນ ການປ່ຽນຂະແໜງການທຸລະກິດ ກໍເຫັນວ່າມີ ຄວາມຈຳເປັນພາວະວິໄສ ໂດຍສະເພາະປ່ຽນເປັນຂະແໜງການພັດທະນາການທ່ອງທ່ຽວວັດທະນະທຳ ໂດຍນຳໃຊ້ທ່າແຮງຂອງບໍລິສັດ ເປັນຕົ້ນສະຖານທີ່ ສິ່ງປຸກສ້າງ ສິ່ງເອື້ອອຳນວຍຄວາມສະດວກຕ່າງໆ ທີ່ມີຢູ່ ແລ້ວ ໝູນໃຊ້ໃຫ້ເປັນປະໂຫຍດໃນທຸລະກິດຕໍ່ໄປ ເຫັນວ່າເປັນທິດທາງໃນການປະຕິຮູບທຸລະກິດທີ່ດີ ຄວນ ແກ່ການຊຸກຍູ້ ແລະ ສົ່ງເສີມ ໃຫ້ເກີດດອກອອກຜົນໂດຍໄວ.
2. ການພັດທະນາການທ່ອງທ່ຽວວັດທະນະທຳ ແບບປະສົມປະສານ ຢູ່ເຂດເມືອງວັງວຽງ ທີ່ລັດຖະບານໄດ້ມີ ເປົ້າໝາຍສ້າງເປັນເມືອງທ່ອງທ່ຽວ ເຫັນວ່າຖືກຕ້ອງຕາມແນວທາງການພັດທະນາແບບຍືນຍົງຂອງ ລັດຖະບານ ສ.ປ.ປ ລາວ.
3. ເນື່ອງຈາກໂຮງງານຊີມັງວັງວຽງຫຼັງ2 (ບຊລ) ຕັ້ງຢູ່ເມືອງວັງວຽງ ຊຶ່ງເປັນເມືອງທີ່ລັດຖະບານມີເປົ້າໝາຍຈະ ສ້າງເປັນເມືອງທ່ອງທ່ຽວລະດັບຊາດໃນອະນາຄົດ ຈຶ່ງມີແນວໂນ້ມທີ່ຈະຖືກຢຸດຕິການດຳເນີນກິດຈະການ ຜະລິດຊີມັງ ໃນກໍລະນີຫາກຄົບຕາມອາຍຸສັນຍາລົງທຶນໃນອະນາຄົດອັນໃກ້ນີ້.
4. ຜ່ານການທາບທາມໄລຍະຜ່ານມາ ເຫັນວ່າມີ ບໍລິສັດເຄືອຂ່າຍເຕົາໂມໂລຊີຢຸນນານສຽນຫານ ຈຳກັດ ພຽງ ບໍລິສັດດຽວ ທີ່ໄດ້ແຈ້ງເຈດຈຳນົງໃນການຮ່ວມລົງທຶນໃນບໍລິສັດຊີມັງລາວມະຫາຊົນ ດ້ວຍການຊື້ຮຸ້ນ ເພື່ອ ກາຍເປັນຮຸ້ນລາຍໃຫຍ່ ໂດຍປະຕິບັດຕາມຂັ້ນຕອນຂອງລະບຽບການມອບໂອນຮຸ້ນ ຂອງຕະຫຼາດຫຼັກຊັບ ລາວ ເຫັນວ່າຈະມີຄວາມຍຸດຕິທຳແກ່ບັນດາຂາຮຸ້ນ.
5. ຄະນະຮັບຜິດຊອບຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກໃນການສ້າງແຜນຟື້ນຟູ ທຸລະກິດ ບຊລ ໄດ້ມີ ຄວາມເປັນເອກະພາບໃນການສະໜັບສະໜູນ ເພື່ອໃຫ້ແຜນຟື້ນຟູ ບຊລ ສະບັບນີ້ຖືກນຳໄປຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ ຈຶ່ງຂໍຮຽກຮ້ອງມາຍັງ ບໍລິສັດເຄືອຂ່າຍເຕົາໂມໂລຊີ ຢຸນນານ ສຽນຫານ ຈຳກັດ ຈົ່ງໄດ້ ສືບຕໍ່ເຈດຈຳນົງ ໃນການລົງທຶນພັດທະນາທຸລະກິດທ່ອງທ່ຽວວັດທະນະທຳ ດ້ວຍຄວາມຈິງໃຈ ໂດຍອີງໃສ່ ກົດໝາຍ ແລະ ລະບຽບການກ່ຽວຂ້ອງຂອງ ສ.ປ.ປ.ລາວ. ພ້ອມນັ້ນ ກໍຂໍຮຽກຮ້ອງ ມາຍັງທຸກພາກສ່ວນທີ່ ກ່ຽວຂ້ອງຈົ່ງໄດ້ໃຫ້ການຮ່ວມມື ສະໜັບສະໜູນ ໃຫ້ແຜນດັ່ງກ່າວສາມາດຊ່ວຍໃຫ້ ບໍລິສັດຊີມັງລາວ ມະຫາຊົນ ປັບປຸງ ຟື້ນຟູຕົນເອງ ໃຫ້ສຳເລັດຕາມເປົ້າໝາຍ ຕາມເວລາອັນຄວນ.

ສະຫຼຸບຄວາມແລ້ວ: ທາງເລືອກນີ້ ເປັນທາງເລືອກນຶ່ງດຽວ ທີ່ຈະປັບປຸງ ແລະ ຟື້ນຟູທຸລະກິດຂອງ ບຊລ ໃຫ້ພົ້ນ ຈາກພາວະລົ້ມລະລາຍ ແລະ ທັງເປັນທາງເລືອກດຽວ ທີ່ມີຜູ້ລົງທຶນສົນໃຈທີ່ຈະຊື້ຮຸ້ນຂອງ ບຊລ, ຊຶ່ງໄດ້ເຮັດ ເອກະສານແຈ້ງເຈດຈຳນົງຊື້ຮຸ້ນເປັນລາຍລັກອັກສອນ ບົນເງື່ອນໄຂ:

1. ບຊລ ຕ້ອງຢູ່ໃນສະຖານະບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ.
2. ບຊລ ຕ້ອງສາມາດຕໍ່ອາຍຸ ຕື່ມອີກ ຫຼື ສາມາດສ້າງສັນຍາລົງທຶນນຳລັດຖະບານລາວສະບັບໃໝ່ໄດ້ ທັນເວລາ.
3. ບຊລ ຕ້ອງສາມາດປ່ຽນຂະແໜງທຸລະກິດຫຼັກ ຈາກ ຜະລິດ ແລະ ຈຳໜ່າຍຊີມັງ ເປັນຂະແໜ ງການພັດທະນາການທ່ອງທ່ຽວ ໄດ້.

ແຜນການຟື້ນຟູທຸລະກິດສະບັບນີ້ ໄດ້ຜ່ານການຄົ້ນຄວ້າ ແລະ ເຫັນດີເປັນເອກະພາບ ໃນກອງປະຊຸມຄະນະຮັບຜິດຊອບຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກ ເພື່ອສ້າງແຜນຟື້ນຟູທຸລະກິດຂອງບໍລິສັດຊີມັງລາວມະຫາຊົນ ຄັ້ງວັນທີ 30/12/2021.

ຫົວໜ້າຄະນະຮັບຜິດຊອບຊີ້ນຳ
ສ້າງແຜນປັບປຸງ ແລະ ຟື້ນຟູທຸລະກິດ ບຊລ

ເອກະສານຕິດຄັດ : 06

ໃບມອບສິດ

1.ຂ້າພະເຈົ້າ.....ສັນຊາດ.....

ບັດປະຈຳຕົວ/ບັດສະປໍເລກທີ..... ID card/passport NO:……..……

ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....

ເປັນຜູ້ຖືຮຸ້ນຂອງ ບໍລິສັດຊີມັງລາວ ມະຫາຊົນ
ມີຮຸ້ນທີ່ຖືຈຳນວນ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ

2.ຂໍມອບໝາຍ ທ່ານ/ທ່ານນາງ.....ບັດປະຈຳຕົວ/ບັດສະປໍເລກທີ.....

ເຮືອນເລກທີ່.....ບ້ານ.....ເມືອງ.....ແຂວງ.....

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະ ເຈົ້າຢູ່ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຂອງ ບໍລິສັດຊີມັງລາວມະຫາຊົນ,ທີ່ຈະຈັດຂຶ້ນໃນວັນທີ 29 ເມສາ 2022 ຢູ່ຫ້ອງປະຊຸມໃຫ່ຍ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້(ເລືອກເອົາໜຶ່ງ ຈາກ ສອງທາງເລືອກລຸ່ມນີ້)

1. □ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວສົມຄວນ;ຫຼື
2. □ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງ ຄະແນນເຫັນດີ ຫຼື ບໍ່ເຫັນດີ ໃນທຸກໆວາລະລຸ່ມນີ້):

ວາລະທີ 2: ພິຈາລະນາ ແລະຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 3: ພິຈາລະນາ ແລະຮັບຮອງຜົນການດຳເນີນທຸລະກິດ ປະຈຳປີ 2021

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 4 : ພິຈາລະນາ ແລະຮັບຮອງບົດລາຍງານວຽກງານການເງິນປະຈຳປີ 2021 ແລະບໍ່ຈ່າຍເງິນປັນຜົນ

□ເຫັນດີ/approve □ບໍ່ເຫັນດີ/disapprove

ວາລະທີ 5 : ພິຈາລະນາ ແລະຮັບຮອງແຜນປັບປຸງ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ

□ເຫັນດີ/approve □ບໍ່ເຫັນດີ/disapprove

3. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

4. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ ບໍ ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

5. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງ ທຸກປະການ.

ທີ່.....ວັນທີ...../.....2022

ເຊັນຜູ້ຖືຮຸ້ນທີ່ມອບໝາຍ

ເຊັນຜູ້ຕາງໜ້າ

ໝາຍເຫດ:ເອກະສານທັງໝົດນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ

ແຜນທີ່ຕະຫຼາດຫຼັກຊັບລາວ

